vhs DVV International

ການ ຮ່ວມມື ເຢຍລະມັນ
DEUTSCHE ZUSAMMENARBEIT

ຈົດໝາຍຂ່າວ 2025

# ການຮຽນຮູ້ຕະຫຼອດຊີວິດ & ການສຶກສານອກໂຮງຮຽນ

## ໃນ ສປປ ລາວ ແລະ ອາຊີຕາເວັນອອກສ່ຽງໃຕ້




ສະໜັບສະໜູນໂດຍ:

Federal Ministry
for Economic Cooperation
and Development



ທ່ານຜູ້ອ່ານທີ່ຮັກແພງ,

ຂ້າພະເຈົ້າມີຄວາມຍິນດີທີ່ຈະນຳສະເໜີຈົດໝາຍຂ່າວສະບັບປະຈຳປີ 2025 ຂອງຫ້ອງການ ດີວີວີ ອິນເຕີເນເຊິນແນວ ປະຈຳພາກພື້ນອາຊີຕາເວັນອອກສ່ຽງໃຕ້. ເມື່ອຈົດໝາຍຂ່າວສະບັບນີ້ໄດ້ຖືກເຜີຍແຜ່, ການດຳລົງຕຳແໜ່ງຜູ້ອຳນວຍການປະຈຳພາກພື້ນໃນໄລຍະເວລາເກືອບສາມປີຂອງຂ້າພະເຈົ້າກໍ່ຈະສິ້ນສຸດລົງ. ຂ້າພະເຈົ້າຮູ້ສຶກຂອບໃຈເປັນຢ່າງຍິ່ງສຳລັບປະສົບການທີ່ຂ້າພະເຈົ້າໄດ້ມີຢູ່ໃນປະເທດລາວ, ທັງທາງດ້ານໜ້າທີ່ວຽກງານ ແລະ ຊີວິດສ່ວນຕົວ. ພ້ອມກັນນັ້ນ, ນີ້ຍັງເປັນເວລາທີ່ຈະຢຸດພັກຊົ່ວຄາວ ແລະ ສະທ້ອນຄືນ. ຂ້າພະເຈົ້າຄິດວ່າພວກເຮົາທຸກຄົນສາມາດພູມໃຈໃນສິ່ງທີ່ພວກເຮົາປະຕິບັດໄດ້ສຳເລັດໃນໄລຍະສອງສາມປີຜ່ານມາ.

ເຖິງວ່າຈະມີຫຼາຍເຫດການສຳຄັນ, ຜົນໄດ້ຮັບ ແລະ ຄວາມຄືບໜ້າອັນໃຫຍ່ຫຼວງກໍ່ຕາມ, ແຕ່ສິ່ງທີ່ຂ້າພະເຂົ້າປະທັບໃຈເປັນພິເສດແມ່ນການຄົບຮອບ 15 ປີ ຂອງຫ້ອງການ ດີວີວີ ອິນເຕີເນເຊິນແນວ ໃນ ສປປ ລາວ, ທີ່ພວກເຮົາໄດ້ສະເຫຼີມສະຫຼອງຮ່ວມກັນກັບບັນດາຄູ່ຮ່ວມພັດທະນາໃນ ສປປ ລາວ ແລະ ສາກົນ ໃນທ້າຍປີທີ່ຜ່ານມາ ເຊິ່ງເປັນສ່ວນໜຶ່ງຂອງກອງປະຊຸມສາກົນກ່ຽວກັບການຮຽນຮູ້ຕະຫຼອດຊີວິດ. ໂດຍການເປັນກຽດເຂົ້າຮ່ວມຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ຂອງ ສປປ ລາວ, ສະຖານທູດເຢຍລະມັນ, ອະດີດຜູ້ອຳນວຍການພາກພື້ນ ແລະ ບັນດາຄູ່ຮ່ວມພັດທະນາລະດັບຊາດ ແລະ ລະດັບສາກົນ, ບັນດາແຂກຜູ້ມີກຽດ ແລະ ເພື່ອນມິດ ໄດ້ສະແດງໃຫ້ເຫັນເຖິງພື້ນຖານອັນກ້ວາງຂວາງ ແລະ ການສະໜັບສະໜູນທີ່ພວກເຮົາໃຊ້ໃນການສົ່ງເສີມການຮຽນຮູ້ຕະຫຼອດຊີວິດຢູ່ລາວ ແລະ ຕ່າງປະເທດ.

ຈົດໝາຍຂ່າວສະບັບນີ້ນຳສະເໜີກ່ຽວກັບຄວາມຄືບໜ້າຂອງບັນດາແຜນງານຕ່າງຂອງພວກເຮົາທີ່ກຳລັງດຳເນີນ. ເຫຼົ່ານີ້ລວມມີການຮັບຮອງເອົາແຜນປະຕິບັດງານແຫ່ງຊາດສຳລັບການຮຽນຮູ້ຕະຫຼອດຊີວິດ, ກິດຈະກຳຕໍ່ເນື່ອງຂອງແຜນງານຮູບແບບການສ້າງລະບົບການຮຽນຮູ້ ແລະ ການສຶກສາຂອງຜູ້ໃຫຍ່ (ALESBA), ການທົດລອງນຳໃຊ້ ແອັບການຮຽນຮູ້ແບບດິຈິຕອນໃນແຜນງານການສຶກສາທຽບເທົ່າ, ການເຜີຍແຜ່ແນວຄວາມຄິດການຮຽນຮູ້ຕະຫຼອດຊີວິດໃນຫຼັກສູດຝຶກອົບຮົມຄູ ແລະ ການພັດທະນາສູນຮຽນຮູ້ຊຸມຊົນຕົວແບບສີ່ແຫ່ງ ທີ່ໄດ້ສະໜັບສະໜູນນັບແຕ່ໄລຍະເລີ່ມຕົ້ນຂອງໂຄງການປະຈຸບັນຂອງພວກເຮົາໃນປີ 2024. ການເຮັດວຽກຮ່ວມກັບຄູ່ຮ່ວມພັດທະນາໃນລະດັບພາກພື້ນແມ່ນນຳສະເໜີຜ່ານບົດຄວາມຈາກຫ້ອງການ ດີວີວີ ອິນເຕີເນເຊິນແນວປະຈຳປະເທດກຳປູເຈຍ ແລະ ຈາກສະມາຄົມອາຊີ-ປາຊີຟິກໃຕ້ສຳລັບການສຶກສາຂັ້ນພື້ນຖານ ແລະ ຜູ້ໃຫຍ່ (ASPBAE). ດັ່ງທີ່ທ່ານຈະໄດ້ອ່ານໃນຕອນຕົ້ນຂອງຈົດໝາຍຂ່າວສະບັບນີ້, ການປຶກສາຫາລືດ້ານນະໂຍບາຍລະດັບພາກພື້ນ ແລະ ການວິໄຈກ່ຽວກັບການຈັດຕັ້ງປະຕິບັດການຮຽນຮູ້ຕະຫຼອດຊີວິດ ໄດ້ຖືກກຳນົດກອບແນວຄວາມຄິດ ແລະ ຄຸ້ມຄອງໂດຍກົງຈາກຫ້ອງການພາກພື້ນໃນ ສປປ ລາວ. ບັນດາໂຄງການລິເລີ່ມທັງໝົດນີ້ຄົງຈະເປັນໄປບໍ່ໄດ້ ຖ້າປາດສະຈາກເຄືອຂ່າຍຄູ່ຮ່ວມພັດທະນາຂອງພວກເຮົາຄື: ກົມການສຶກສານອກໂຮງຮຽນ (DNFE) ແລະ ສູນພັດທະນາການສຶກສານອກໂຮງຮຽນ (NFEDC) ຈາກກະຊວງສຶກສາທິການ ແລະ ກິລາ (MoES), ຄະນະສຶກສາສາດ (FED) ຈາກມະຫາວິທະຍາໄລແຫ່ງຊາດ (NUOL) ແລະ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ (LYU) ລວມທັງເຄືອຂ່າຍໃນລະດັບພາກພື້ນຂອງພວກເຮົາ ລວມທັງປະເທດກຳປູເຈຍ, ປະເທດໄທ ແລະ ປະເທດຫວຽດນາມ.

ເປົ້າໝາຍຂອງ ດີວີວີ ອິນເຕີເນເຊິນແນວ ແມ່ນເພື່ອເສີມສ້າງໂຄງສ້າງການສຶກສາສຳລັບຊາວໜຸ່ມ ແລະ ຜູ້ໃຫຍ່ໃນທົ່ວໂລກ. ສິ່ງດັ່ງກ່າວນີ້ແມ່ນຮຽກຮ້ອງໃຫ້ມີຄຳໝັ້ນສັນຍາທາງດ້ານການເມືອງ, ການປູກຈິດສຳນຶກ, ສະຖາບັນທີ່ເຂັ້ມແຂງ, ວິທີການ ແລະ ສື່ ແລະ ອຸປະກອນການຮຽນຮູ້ທີ່ດີ. ຢ່າງໃດກໍ່ຕາມ, ທັງໝົດນີ້ຈະເກີດຂຶ້ນໄດ້ກໍ່ຕໍ່ເມື່ອມີບຸກຄົນທີ່ມີຄວາມມຸ່ງໝັ້ນ, ມີຄຸນສົມບັດ ແລະ ເຕັມໃຈທີ່ຈະຮຽນຮູ້ ແລະ ເຊື່ອໝັ້ນໃນແນວຄວາມຄິດຂອງການສຶກສາຂອງຜູ້ໃຫຍ່. ເມື່ອເບິ່ງຫວນຄືນໃນໄລຍະສອງສາມປີຜ່ານມາ, ຂ້າພະເຈົ້າສາມາດເວົ້າໄດ້ຢ່າງໝັ້ນໃຈວ່າມີຄວາມຕັ້ງໃຈຫຼາຍໃນການສະໜັບສະໜູນສຶກສາສຳລັບຜູ້ໃຫຍ່. ສິ່ງນີ້ເຮັດໃຫ້ຂ້າພະເຈົ້າມີຄວາມຫວັງຢ່າງຍິ່ງວ່າຄວາມກ້າວໜ້າແບບຍືນຍົງຈະສືບຕໍ່ດຳເນີນໃນອະນາຄົດ.

ດ້ວຍເຈດຕະນາດັ່ງກ່າວ, ຂ້າພະເຈົ້າຕ້ອງຂໍຂອບໃຈມາຍັງຊຸມຊົນການສຶກສາຜູ້ໃຫຍ່ ແລະ ການສຶກສານອກໂຮງຮຽນທີ່ໄດ້ໃຫ້ການຮ່ວມມືອັນດີເລີດໃນໄລຍະສາມປີຜ່ານມາ. ຂໍໃຫ້ທຸກທ່ານຈົ່ງສືບຕໍ່ສູ້ຊົນເພື່ອເພີ່ມທະວີການເຂົ້າເຖິງກຸ່ມເປົ້າໝາຍຂອງພວກເຮົາ ເພື່ອໃຫ້ເຂົາເຈົ້າມີການສຶກສາທີ່ມີຄຸນນະພາບ ທັງໃນລາວ, ກຳປູເຈຍ ແລະ ພາກພື້ນອາຊີຕາເວັນອອກສ່ຽງໃຕ້ທັງໝົດ!

ຂ້າພະເຈົ້າຫວັງວ່າຈະຕິດຕໍ່ພົວພັນກັບບັນດາທ່ານ!

Christoph Jost

*ຜູ້ອຳນວຍການປະຈຳພາກພື້ນ*

# ການຮ່ວມມືລະດັບພາກພື້ນວ່າດ້ວຍການຮຽນຮູ້ຕະຫຼອດຊີວິດ ໃນອາຊີຕາເວັນອອກສຽງໃຕ້

## *ການວິໄຈລະຫວ່າງປະເທດ ແລະ ການປຶກສາຫາລືດ້ານນະໂຍບາຍ*

*ຄຣິສຕ໋ອຟ ໂຢສດ*
ດີວີວີ ອິນເຕີເນເຊິນແນວ, ລາວ

ເປົ້າໝາຍການພັດທະນາແບບຍືນຍົງ 4 ຂອງວາລະ 2030 ຂອງອົງການສະຫະປະຊາຊາດ ໄດ້ວາງອອກໃນຖະແຫຼງການຂອງອົງການສະຫະປະຊາຊາດ ເພື່ອ "ຮັບປະກັນການສຶກສາທີ່ມີຄຸນນະພາບທີ່ທົ່ວເຖິງ ແລະ ເທົ່າທຽມ ແລະ ສົ່ງເສີມໂອກາດດ້ານການຮຽນຮູ້ຕະຫຼອດຊີວິດສໍາລັບທຸກຄົນ". ເກືອບໜຶ່ງທົດສະວັດພາຍຫຼັງການເຜີຍແຜ່ SDG 4, ເຊິ່ງໄດ້ຜ່ານກາງສະໄໝຂອງວາລະ 2030, ສາມາດສັງເກດເຫັນໄດ້ວ່າ ການຮຽນຮູ້ຕະຫຼອດຊີວິດ (LLL) ໄດ້ຮັບແຮງຊຸກດັນຢູ່ໃນຫຼາຍປະເທດທົ່ວໂລກ, ລວມທັງປະເທດທີ່ຫ້ອງການ ດີວີວີ ອິນເຕີເນເຊິນແນວກໍາລັງດໍາເນີນໂຄງການໃນພາກພື້ນອາຊີຕາເວັນອອກສຽງໃຕ້ - ສປປ ລາວ ແລະ ກໍາປູເຈຍ. ນະໂຍບາຍ, ຍຸດທະສາດ, ດໍາລັດ ແລະ ຂອບວຽກງານອື່ນໆ ໄດ້ຖືກການຮັບຮອງເອົາ ຫຼື ຢູ່ໃນຂັ້ນຕອນດໍາເນີນການໃຫ້ສໍາເລັດ. ການແລກປ່ຽນຄໍາຄິດເຫັນຂອງບັນດາຜູ້ມີສ່ວນຮ່ວມຈາກຂະແໜງການຕ່າງໆ ໃນດ້ານວິຊາການ ແລະ ຄະນະກໍາມາທິການຂັ້ນນໍາຂັ້ນສູງ ແລະ ຜ່ານການສົນທະນານະໂຍບາຍລະຫວ່າງບັນດາກະຊວງ. ການດໍາເນີນວຽກງານການຮຽນຮູ້ຕະຫຼອດຊີວິດຢ່າງມີປະສິດທິຜົນ, ຫັນປ່ຽນຈາກນະໂຍບາຍໄປສູ່ສະຖາບັນ, ການສ້າງຂີດຄວາມສາມາດ ແລະ ການປະຕິບັດການຮຽນຮູ້ທີ່ເປັນຮູບປະທໍາ, ປະຈຸບັນແມ່ນໜຶ່ງໃນບັນດາວຽກງານຕົ້ນຕໍທີ່ໄດ້ຮັບການສະໜັບສະໜູນຈາກ ຫ້ອງການ ດີວີວີ ອິນເຕີເນເຊິນແນວ ປະຈໍາພາກພື້ນອາຊີຕາເວັນອອກສຽງໃຕ້. ຕາມຄວາມເປັນມາດັ່ງກ່າວນີ້ ແລະ ສອດຄ່ອງກັບໂຄງການໃນ ສປປ ລາວ ແລະ ກໍາປູເຈຍ ທີ່ໄດ້ຮັບການສະໜັບສະໜູນຈາກກະຊວງການຮ່ວມມື ແລະ ພັດທະນາເສດຖະກິດເຢຍລະມັນ (BMZ), ດີວີວີ ອິນເຕີເນເຊິນແນວ ໄດ້ນໍາສະເໜີຂໍ້ມູນໃຫ້ເພື່ອໃຫ້ເກີດຄວາມເຂົ້າໃຈແກ່ບັນດາພາກສ່ວນກ່ຽວຂ້ອງທີ່ສໍາຄັນກ່ຽວກັບຕົວຢ່າງການປະຕິບັດທີ່ດີທີ່ສຸດໃນການນໍາເອົາຕົວຢ່າງການຈັດຕັ້ງປະຕິບັດການຮຽນຮູ້ຕະຫຼອດຊີວິດໃນພາກພື້ນ ແລະ ສາກົນ. ເປົ້າໝາຍສໍາຄັນນີ້ໄດ້ຮັບການກ່າວເຖິງ ໂດຍສະເພາະແມ່ນສອງກິດຈະກໍາຫຼັກທີ່ເຄື່ອນໄຫວ ໃນປີ 2024 ແລະ 2025.

### ການວິໄຈລະຫວ່າງປະເທດ

ດີວີວີ ອິນເຕີເນເຊິນແນວ ໄດ້ປະສານງານການວິໄຈລະຫວ່າງປະເທດກ່ຽວກັບການຈັດຕັ້ງປະຕິບັດການຮຽນຮູ້ຕະຫຼອດຊີວິດກັບຄູ່ຮ່ວມວິໄຈທີ່ໄດ້ຮັບການພິສູດແລ້ວ ດັ່ງນີ້:

- ຄະນະສຶກສາສາດ ຈາກມະຫາວິທະຍາໄລຈຸລາລົງກອນ ທີ່ບາງກອກ, ປະເທດໄທ
- ຄະນະສຶກສາສາດ ຈາກມະຫາວິທະຍາໄລແຫ່ງຊາດ, ສປປ ລາວ
- ອົງການລັດຖະມົນຕີສຶກສາແຫ່ງອາຊີຕາເວັນອອກສ່ຽງໃຕ້ ສູນການຮຽນຮູ້ຕະຫຼອດຊີວິດຂອງພາກພື້ນ (SEAMEO CELLL) ໃນປະເທດຫວຽດນາມ
- ຄະນະສຶກສາສາດ ຈາກມະຫາວິທະຍາໄລຫຼວງພະນົມເປັນ (RUPP), ປະເທດກໍາປູເຈຍ



ທີມງານນັກຄົ້ນຄວ້າ ຂອງການວິໄຈ ລະຫວ່າງປະເທດ

ພາຍຫຼັງການປຶກສາຫາລືເບື້ອງຕົ້ນກັບຄູ່ຮ່ວມວິໄຈທັງໝົດໃນຕົ້ນປີ 2024, ໂຄງຮ່າງການວິໄຈ ແລະ ຂອບເຂດການວິໄຈໄດ້ກໍານົດໃນລະຫວ່າງກອງປະຊຸມຄົ້ນຄວ້າທີ່ຈັດຂຶ້ນຢູ່ ຫ້ອງການ SEAMEO CELLL ໃນເດືອນກໍລະກົດ 2024. ບົດກໍລະນີສຶກສາຂອງແຕ່ລະປະເທດໄດ້ຖືກນໍາສະເໜີໃນກອງປະຊຸມສາກົນກ່ຽວກັບການຮຽນຮູ້ຕະຫຼອດຊີວິດຢູ່ນະຄອນຫຼວງວຽງຈັນໃນທ້າຍປີ 2024. ໃນຕົ້ນປີ 2025, ການສຶກສາທັງໝົດໄດ້ຖືກປັບປຸງ ແລະ ຮັບປະກັນຄຸນນະພາບ ດ້ວຍການສະໜັບສະໜູນຈາກທີ່ປຶກສາສາກົນ, ອະດີດຫົວໜ້າຂະແໜງການສຶກສາຈາກຫ້ອງການພາກພື້ນຂອງອົງການ ຢູເນສໂກ (UNESCO) ທີ່ບາງກອກ, ເຊິ່ງເຮັດການວິເຄາະປຽບທຽບ ແລະ ຄໍາແນະນໍາດ້ານນະໂຍບາຍ ທີ່ລະອຽດ ແລະ ຮອບດ້ານ. ໃນກອງປະຊຸມປຶກສາຫາລືເພື່ອຄົ້ນຄວ້າຄັ້ງທີ 2 ທີ່ນະຄອນຫຼວງວຽງຈັນໃນເດືອນພຶດສະພາ 2025 ບັນດາຜົນຂອງການວິໄຈທັງໝົດໄດ້ຖືກນໍາສະເໜີ ແລະ ກວດສອບອີກຄັ້ງໜຶ່ງ. ບົດວິໄຈສະບັບສົມບູນໄດ້ຖືກຈັດພິມສໍາເລັດໃນທ້າຍປີ 2025 ແລະ ໄດ້ຮັບການສະໜັບສະໜູນຈາກມະຫາວິທະຍາໄລພະນົມເປັນ (RUPP) ໃນກໍາປູເຈຍ. ການເຜີຍແຜ່ຢ່າງເປັນທາງການຂອງການວິໄຈໃນປັດຈຸບັນແມ່ນວາງແຜນທີ່ຈະຈັດຂຶ້ນໃນລະຫວ່າງກອງປະຊຸມຄະນະກໍາມະການຂອງ SEAMEO CELLL ໃນເດືອນຕຸລາ, ລວມທັງຜູ້ສ້າງນະໂຍບາຍການຮຽນຮູ້ຕະຫຼອດຊີວິດ ແລະ ຜູ້ຊ່ຽວຊານຈາກ 13 ປະເທດຈາກພາກພື້ນ. ສາມາດດາວໂຫຼດບົດວິໄຈໄດ້ທີ່ເວັບໄຊຂອງຫ້ອງການ ດີວີວີ ອິນເຕີເນເຊິນແນວ ລາວ.

ຫວັງວ່າ ການວິໄຈນີ້ຈະເປັນເຄື່ອງມືທີ່ເປັນປະໂຫຍດເພື່ອຍົກສູງຄວາມຮັບຮູ້ກ່ຽວກັບການຮຽນຮູ້ຕະຫຼອດຊີວິດຂອງບັນດາພາກສ່ວນກ່ຽວຂ້ອງຈາກທົ່ວຂະແໜງການສຶກສາ ແລະ ຂະແໜງການອື່ນໆ.

## ການປຶກສາຫາລືດ້ານນະໂຍບາຍລະດັບພາກພື້ນ

ໃນເດືອນສິງຫາ 2025, ຫ້ອງການ ດີວີວີ ອິນເຕີເນເຊີນແນວປະຈຳ ພາກພື້ນອາຊີຕາເວັນອອກສ່ຽງໃຕ້ ໄດ້ຈັດກອງປະຊຸມປຶກສາຫາລືດ້ານນະໂຍບາຍລະດັບພາກພື້ນກ່ຽວກັບການຮຽນຮູ້ຕະຫຼອດຊີວິດ ເຊິ່ງມີບັນດາຜູ້ກຳນົດນະໂຍບາຍ ແລະ ຊ່ຽວຊານຈາກລາວ, ກຳປູເຈຍ ແລະ ໄທ ປະມານ 30 ທ່ານເຂົ້າຮ່ວມ. ຫ້ອງການພາກພື້ນຂອງອົງການ UNESCO ປະຈຳບາງກອກ ແລະ ສະຖາບັນ UNESCO ສຳລັບການຮຽນຮູ້ຕະຫຼອດຊີວິດ (UIL) ໄດ້ຮ່ວມມືກັບ ດີວີວີ ອິນເຕີເນເຊີນແນວ ແລະ ໄດ້ສົ່ງຜູ້ຊ່ຽວຊານເພື່ອນຳສະເໜີຫົວຂໍ້ສຳຄັນທີ່ມີຄວາມສົນໃຈ.

### ຈຸດປະສົງຫຼັກຂອງກອງປະຊຸມມີດັ່ງນີ້:

- ການແລກປ່ຽນ, ສົນທະນາ ແລະ ຮຽນຮູ້ກ່ຽວກັບນະໂຍບາຍ, ຍຸດທະສາດ ແລະ ກົນໄກການປົກຄອງທີ່ມີຢູ່ແລ້ວເພື່ອການຮຽນຮູ້ຕະຫຼອດຊີວິດຈາກບັນດາປະເທດທີ່ເຂົ້າຮ່ວມ.
- ການໃຫ້ຂໍ້ມູນ ແລະ ສົ່ງເສີມການສົນທະນາແບບຖາມ-ຕອບກ່ຽວກັບແຜນປະຕິບັດງານສຳລັບການຮຽນຮູ້ຕະຫຼອດຊີວິດ ແລະ ກົນໄກການຈັດຕັ້ງປະຕິບັດຈາກບັນດາປະເທດທີ່ເຂົ້າຮ່ວມ.
- ການນຳສະເໜີຜົນຂອງການວິໄຈລະຫວ່າງປະເທດກ່ຽວກັບການຈັດຕັ້ງປະຕິບັດການຮຽນຮູ້ຕະຫຼອດຊີວິດໃນລາວ, ກຳປູເຈຍ, ໄທ ແລະ ຫວຽດນາມ - ໂດຍເນັ້ນໃສ່ຂໍ້ສະເໜີແນະດ້ານນະໂຍບາຍ ແລະ ຄວາມເຂົ້າໃຈໃນທັດສະນະທົ່ວໂລກ.
- ການແລກປ່ຽນ ແລະ ການຮຽນຮູ້ກ່ຽວກັບການຮ່ວມມືຂອງມະຫາວິທະຍາໄລເພື່ອສະໜັບສະໜູນການປະຕິບັດການຮຽນຮູ້ຕະຫຼອດຊີວິດ (ການສ້າງຄວາມອາດສາມາດ, ການເຊື່ອມໂຍງຂອງການຮຽນຮູ້ຕະຫຼອດຊີວິດ ເຂົ້າໃນການສຶກສາສາມັນ)
- ການນຳສະເໜີ, ສົນທະນາ ແລະ ຮຽນຮູ້ວິທີການຮຽນຕະຫຼອດຊີວິດໄດ້ຮັບການສະໜັບສະໜູນ ແລະ ຈັດຕັ້ງປະຕິບັດໃນສະຖາບັນການຮຽນຮູ້ໃນລະດັບຊຸມຊົນ (ເຊັ່ນ: ສູນການຮຽນຮູ້ຕະຫຼອດຊີວິດ, ສູນການຮຽນຮູ້ຊຸມຊົນຕົວແບບ), ລວມທັງການລົງຢ້ຽມຢາມສູນການຮຽນຮູ້ຊຸມຊົນທີ່ຢູ່ໃກ້ກັບສະຖານທີ່ຈັດປະຊຸມ.
- ການນຳສະເໜີຕົວຢ່າງ ແລະ ກົນໄກເພື່ອເສີມສ້າງການຈັດຕັ້ງປະຕິບັດການຮຽນຮູ້ຕະຫຼອດຊີວິດ ແລະ ການສຶກສານອກໂຮງຮຽນ/ຜູ້ໃຫຍ່ (ເມືອງແຫ່ງການຮຽນຮູ້, ALESBA, RVA)

ການສົນທະນານະໂຍບາຍພາກພື້ນ ຖືວ່າເປັນປະໂຫຍດຫຼາຍສຳລັບຜູ້ເຂົ້າຮ່ວມທັງໝົດ, ເນື່ອງຈາກວ່າເຂົາເຈົ້າສາມາດແລກປ່ຽນກ່ຽວກັບຄວາມຄືບໜ້າ ແລະ ສິ່ງທ້າທາຍ ແລະ ຮຽນຮູ້ເຊິ່ງກັນ ແລະ ກັນ ກ່ຽວກັບວິທີການສົ່ງເສີມການຈັດຕັ້ງປະຕິບັດການຮຽນຮູ້ຕະຫຼອດຊີວິດຢູ່ລາວ, ກຳປູເຈຍ ແລະ ໄທ.



ການໄປຢ້ຽມຢາມສູນການຮຽນຮູ້ຊຸມຊົນຕົວແບບ

# ແນວທາງການສົ່ງເສີມແບບສ້າງສັນຂອງ ASPBAE ໃນເວທີປາໄສອາຊີປາຊີຟິກຄັ້ງທີ 12 ກ່ຽວກັບການພັດທະນາແບບຍືນຍົງ (APFSD)



*Helen Dabu*
ASPBAE

ສະມາຄົມອາຊີໃຕ້ເພື່ອການສຶກສາຂັ້ນພື້ນຖານ ແລະ ຜູ້ໃຫຍ່ (ASPBAE) ໄດ້ເຂົ້າຮ່ວມຢ່າງຕັ້ງໜ້າໃນຂະບວນການທີ່ນຳໄປສູ່ ແລະ ການສົນທະນາຫຼັກ ໃນເວທີປາໄສອາຊີ-ປາຊີຟິກ ຄັ້ງທີ 12 ກ່ຽວກັບການພັດທະນາແບບຍືນຍົງ (APFSD), ເນັ້ນໜັກເຖິງການເຊື່ອມໂຍງລະຫວ່າງ ເປົ້າໝາຍການພັດທະນາແບບຍືນຍົງ 4 (SDG 4) ແລະ ການທົບທວນເປົ້າໝາຍການພັດທະນາແບບຍືນຍົງ (SDGs).

ກອງປະຊຸມ APFSD ຈັດຂຶ້ນໃນລະຫວ່າງວັນທີ 25 ຫາ 28 ກຸມພາ 2025 ໂດຍຄະນະກຳມາທິການເສດຖະກິດ ແລະ ສັງຄົມຂອງສະຫະປະຊາຊາດສຳລັບອາຊີ ແລະ ປາຊີຟິກ (UNESCAP) ທີ່ ສູນປະຊຸມຂອງອົງການສະຫະປະຊາຊາດ (UNCC) ທີ່ບາງກອກ ໃນປະເທດໄທ, ກອງປະຊຸມ APFSD ຄັ້ງທີ 12 ໄດ້ສຸມໃສ່ຫົວຂໍ້ "ກ້າວສູ່ຄວາມຍືນຍົງ, ຄອບຄຸມ, ອ້າງອີງວິທະຍາສາດ ແລະ ຫຼັກຖານທີ່ປະຈັກຕາ ສຳລັບ ວາລະ 2030 ແລະ ເປົ້າໝາຍການພັດທະນາແບບຍືນຍົງ, ບໍ່ປະໃຜໄວ້ໃຫ້ຢູ່ຂ້າງຫຼັງ ໃນອາຊີ ແລະ ປາຊີຟິກ".

APFSD ຄັ້ງທີ 12 ໄດ້ສຸມໃສ່ການປະເມີນຄວາມຄືບໜ້າໂດຍລວມກ່ຽວກັບ SDGs ແລະ ລົງເລິກເຖິງ SDGs ພາຍໃຕ້ການທົບທວນ ໂດຍສະເພາະແມ່ນເປົ້າໝາຍທີ 3 ການມີສຸຂະພາບ ແລະ ຊີວິດການເປັນຢູ່ທີ່ດີ; ເປົ້າໝາຍທີ 5 ມີຄວາມສະເໝີພາບລະຫວ່າງຍິງ-ຊາຍ; ເປົ້າໝາຍທີ 8 ມີວຽກເຮັດງານທີ່ມີກຽດ ແລະ ເສດຖະກິດມີການຂະຫຍາຍໂຕ; ເປົ້າໝາຍທີ 14 ອານຸລັກ ແລະ ນຳໃຊ້ສິ່ງທີ່ມີຊີວິດໃນນ້ຳແບບຍືນຍົງ; ແລະ ເປົ້າໝາຍທີ 17 ເປັນຄູ່ຮ່ວມມືເພື່ອເປົ້າໝາຍການພັດທະນາແບບຍືນຍົງ. ASPBAE ຍັງໄດ້ເຂົ້າຮ່ວມຢ່າງຕັ້ງໜ້າໃນກິດຈະກຳຕ່າງໆ ທີ່ນຳໄປສູ່ກອງປະຊຸມ APFSD ຄັ້ງທີ 12 ໂດຍສະເພາະແມ່ນເວທີປາໄສຊາວໜຸ່ມ APFSD ແລະ ເວທີປາໄສປະຊາຊົນ APPFSD. ນອກຈາກນີ້, ກ່ອນຂະບວນການລະຫວ່າງລັດຖະບານຫຼັກ, ASPBAE ໄດ້ຈັດຕັ້ງ „ການປະຊຸມປະຖົມນິເທດ, ການກຽມຄວາມພ້ອມຂອງພາກສ່ວນປະຊາສັງຄົມ (CSO) ສຳລັບກອງປະຊຸມຂອງເວທີປາໄສອາຊີປາຊີຟິກ 2025 ກ່ຽວກັບການພັດທະນາແບບຍືນຍົງ ແລະ ຂະບວນການທົບທວນໂດຍສະໝັກໃຈໃນລະດັບຊາດ" ໃນວັນທີ 13 ກຸມພາ 2020, ໂດຍມີບັນດາສະມາຊິກ ແລະ ລວມທັງກຸ່ມພັນທະມິດການສຶກສາແຫ່ງຊາດເຂົ້າຮ່ວມ.

ຄະນະຜູ້ຕາງໜ້າ ASPBAE ປະຈຳ APFSD ຄັ້ງທີ 12 ໄດ້ໃຫ້ຄວາມສົນໃຈເຖິງການເຊື່ອມໂຍງທີ່ສຳຄັນລະຫວ່າງ SDG 4 ກັບບັນດາເປົ້າໝາຍເພື່ອທົບທວນຄືນໃນກອງປະຊຸມຂອງກອງປະຊຸມໂຕະມົນ, ໃນນັ້ນຜູ້ເຂົ້າຮ່ວມສ້າງຄວາມເຂົ້າໃຈຮ່ວມກັນກ່ຽວກັບແນວໂນ້ມໃນລະດັບພາກພື້ນ ແລະ ຄວາມຄືບໜ້າຂອງ SDGs ທີ່ກຳລັງທົບທວນ ແລະ ປຶກສາຫາລືກ່ຽວກັບບູລິມະສິດໃນການຈັດຕັ້ງປະຕິບັດ. ໃນການສົນທະນາໂຕະມົນ ASPBAE ໄດ້ຍົກໃຫ້ເຫັນບັນຫາດັ່ງຕໍ່ໄປນີ້:

- ວິເຄາະ SDGs ໃນແນວທາງໂດຍລວມຫຼາຍຂຶ້ນ, ຮັບປະກັນການເຊື່ອມໂຍງລະຫວ່າງການສຶກສາ, ຄວາມທຸກຍາກ, ບົດບາດຍິງຊາຍ ແລະ ທີ່ຢູ່ອາໄສ, ເຊິ່ງສະແດງໃຫ້ເຫັນຜົນກະທົບທີ່ຮຸນແຮງທີ່ສຸດຕໍ່ສຸຂະພາບ.
- ການສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດຂອງແມ່ຍິງ ແລະ ການໃຫ້ບູລິມະສິດກ່ຽວກັບການປ່ຽນແປງເພດສະພາບໃນລະບົບການສຶກສາ.
- ລົງທຶນໃສ່ການຝຶກອົບຮົມ ແລະ ພັດທະນາທັກສະ ແລະ ຊີວິດການເປັນຢູ່ຢ່າງຕໍ່ເນື່ອງ, ເຊັ່ນດຽວກັນກັບການສຶກສາສຳລັບການເຮັດວຽກທີ່ເໝາະສົມ ແລະ ການເປັນຢູ່ທີ່ດີຂອງກຸ່ມໄວໜຸ່ມດ້ອຍໂອກາດ ແລະ ກຸ່ມສູງໃນສັງຄົມ, ລວມທັງການສຶກສາ ແລະ ການຝຶກອົບຮົມດ້ານເຕັກນິກ ແລະ ວິຊາຊີບ (TVET) ແລະ ຄຳແນະນຳທີ່ກ່ຽວຂ້ອງ.
- ພັດທະນາ ແລະ ເສີມສ້າງເສັ້ນທາງການຮຽນຮູ້ ແລະ ການຝຶກອົບຮົມທີ່ມີຄວາມສະເໝີພາບ, ຍືດຢຸ່ນ, ໂດຍການການຮຽນຮູ້ທາງເລືອກ ແລະ ໂອກາດການຮຽນຮູ້ຕະຫຼອດຊີວິດ.

ໃນນາມທີ່ເປັນສ່ວນໜຶ່ງຂອງແນວທາງການສົ່ງເສີມໃນລັກສະນະສ້າງສັນໃນຂະບວນການນີ້, ASPBAE, ຮ່ວມມືກັບ UNESCAP, UNICEF, Global Partnership for Education (GPE), Asian-Pacific Resource and Research Center for Women (ARROW) ແລະ Baha'i International Community, ໄດ້ນຳສະເໜີເລື່ອງ ແລະ ປະສົບການຂອງຜູ້ນຳໄວໜຸ່ມທ້າຄົນໃນການເສີມສ້າງຄວາມເຂັ້ມແຂງຂອງແມ່ຍິງ ແລະ ເດັກຍິງໃນພາກພື້ນ ໃນວາລະກອງປະຊຸມໂດຍຜ່ານຫົວຂໍ້ ຖົງສີນ້ຳຕານ „ກ້າວສູ່ການເຕີບໂຕ: ເສີມສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ ແລະ ເດັກຍິງແຫ່ງອະນາຄົດ" ໃນວັນທີ 28 ກຸມພາ 2025.

ນອກນັ້ນ ASPBAE ຍັງໄດ້ເປີດບູດວາງສະແດງໃນລະຫວ່າງກອງປະຊຸມ APFSD ຫຼັກແຕ່ວັນທີ 24 ຫາ 28 ກຸມພາ 2025. ດ້ວຍຫົວຂໍ້ "ທຳລາຍອຸປະສັກທາງການສຶກສາ: ແນວທາງການປ່ຽນແປງເພດທາງເພດ ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ" ໃນບູດໄດ້ນຳສະເໜີເອກະສານຕ່າງໆ ຈາກຜູ້ຈັດງານ, ເຊິ່ງລວມມີ ASPBAE, ອົງການການສຶກສາຂອງອົງການ UNEI Fe (Gender's Education Initiative) (FemNet4GTE), ການຮ່ວມມືທົ່ວໂລກເພື່ອການສຶກສາ (GPE), ChildFund Asia ແລະ UNESCO Bangkok.

ໃນບູດດັ່ງກ່າວຍັງໄດ້ເປີດໂອກາດໃຫ້ມີການພົບປະສົນທະນາກັບຜູ້ແທນ APFSD ຄັ້ງທີ 12, ໂດຍໃນບູດສະແດງການປະສົມປະສານລະຫວ່າງອົງປະກອບຕ່າງໆ ທີ່ເປັນເອກະລັກເຊັ່ນ: ວີດີໂອ ແລະ ອຸປະກອນປະກອບເພື່ອຖ່າຍຮູບ, ລວມທັງແບບຟອມການລົງທະບຽນສຳລັບການຮ່ວມມືໃນອະນາຄົດ. ASPBAE ໄດ້ເຜີຍແຜ່ບົດລາຍງານ CSO Spotlight ເຊິ່ງໄດ້ນຳສະເໜີກ່ຽວກັບ SDG4 ປະຈຳປີ 2024, ເຊິ່ງໄດ້ຍົກໃຫ້ເຫັນບັນຫາດ້ານການເງິນ, ດ້ານການສຶກສາ, ຄວາມເທົ່າທຽມທາງເພດ, ການມີສ່ວນຮ່ວມທາງສັງຄົມ ແລະ ການດຳເນີນການດ້ານສະພາບດິນຟ້າອາກາດ. ASPBAE ຍັງໄດ້ແຈກຢາຍຖະແຫຼງການອາຊີ-ປາຊີຟິກກ່ຽວກັບການສຶກສາເພື່ອການປ່ຽນແປງທາງເພດ (GTE) ເຊິ່ງໄດ້ຈັດທຳໃນປີ 2024 ໂດຍການຮ່ວມມືກັບອົງການຈັດຕັ້ງແມ່ຍິງ, ມູນນິທິ Pratisandhi (ອິນເດຍ), Aahung (ປາກີສະຖານ) ແລະ UNGEI.

ຜົນໄດ້ຮັບຈາກການສົນທະນາ - ບົດລາຍງານ APFSD ຄັ້ງທີ 12 ແລະ ບົດສະຫຼຸບຂອງປະທານ - ສະເໜີເຂົ້າສະພາເສດຖະກິດ ແລະ ສັງຄົມ ສປຊ (ECOSOC) ແລະ ປະກອບສ່ວນຊ່ວຍໃນການກຳນົດທິດທາງການປຶກສາຫາລືໃນເວທີການເມືອງລະດັບສູງ ຢູ່ ນິວຢອກ.




ທີມງານ ASPBAE ໃນເວທີປາໄສອາຊີ-ປາຊີຟິກກ່ຽວກັບການພັດທະນາແບບຍືນຍົງ

# ແນວທາງການປະຕິບັດທີ່ດີໃນການໂຄສະນາສົ່ງເສີມ:

## *ໂຄງການທົດລອງຂອງ ດີວີວີ ອິນເຕີເນເຊິນແນວ ໃນປະເທດກຳປູເຈຍ*



*Vanna Peou*
DVV International, Cambodia

ຢູ່ໃນໃຈກາງຂອງປະເທດກຳປູເຈຍ, ການເດີນທາງຄັ້ງສຳຄັນກຳລັງດຳເນີນໂດຍຜ່ານໂຄງການທົດລອງຂອງ ດີວີວີ ອິນເຕີເນເຊິນແນວ. ໂຄງການລິເລີ່ມນີ້ແມ່ນສຸມໃສ່ການຊ່ວຍໃຫ້ຊຸມຊົນຂະຫຍາຍຕົວໂດຍຜ່ານການສະໜັບສະໜູນແບບອ່ອນໂຍນທີ່ມີປະສິດທິພາບ, ໂດຍການເຮັດວຽກຢ່າງໃກ້ຊິດກັບກະຊວງສຶກສາທິການ, ຊາວໜຸ່ມ ແລະ ກິລາ (MoEYS), ຄະນະເລຂານຸການການຮຽນຮູ້ຕະຫຼອດຊີວິດແຫ່ງຊາດ ແລະ ມະຫາວິທະຍາໄລລາດຊະວັງພະນົມເປັນ (RUPP). ຮ່ວມກັນນຳໃຊ້ຫຼັກການຂອງການຮຽນຮູ້ ແລະ ການສຶກສາສຳລັບຜູ້ໃຫຍ່ (ALE) ເພື່ອສ້າງຄວາມເຂັ້ມແຂງໃຫ້ຊຸມຊົນທ້ອງຖິ່ນ.

### ທຳຄວາມເຂົ້າໃຈເຖິງຄວາມຈຳເປັນເພື່ອການປ່ຽນແປງ

ການພັດທະນາຊຸມຊົນແມ່ນມີການປ່ຽນແປງສະເໝີ ໂດຍສະເພາະແມ່ນໃນໂລກປະຈຸບັນ ທີ່ການສະໜັບສະໜູນຢ່າງມີປະສິດທິພາບມີຄວາມສຳຄັນຫຼາຍກວ່າທີ່ຜ່ານມາ. ດີວີວີ ອິນເຕີເນເຊິນແນວ ມີຄວາມພູມໃຈທີ່ໄດ້ສະໜັບສະໜູນຮູບແບບການສົ່ງເສີມແບບທາງອ້ອມທີ່ເນັ້ນໃສ່ການເຮັດວຽກຮ່ວມກັນ, ການສົນທະນາແບບເປີດ ແລະ ການມີສ່ວນຮ່ວມຂອງຊຸມຊົນ. ໂດຍການນຳໃຊ້ຫຼັກການ ALE ພວກເຮົາມຸ່ງໝັ້ນທີ່ເພື່ອສ້າງການປ່ຽນແປງທີ່ຍືນຍົງທີ່ມີຄວາມສຳຄັນຢ່າງແທ້ຈິງຕໍ່ຊຸມຊົນ.

### ບົດບາດຂອງ ALE ແລະ ທິດສະດີການຮຽນຮູ້ຂອງຜູ້ໃຫຍ່

ຫຼັກການສຳຄັນຂອງໂຄງການແມ່ນການນຳໃຊ້ເຕັກນິກ ALE, ເຊິ່ງສຸມໃສ່ການສະໜອງໂອກາດການຮຽນຮູ້ຕະຫຼອດຊີວິດສຳລັບຜູ້ໃຫຍ່. ທີ່ແຕກຕ່າງຈາກການສຶກສາແບບດັ້ງເດີມ, ວິທີການຂອງພວກເຮົາໃຫ້ຄວາມສຳຄັນກັບຄວາມຕ້ອງການສະເພາະຂອງຜູ້ຮຽນທີ່ເປັນຜູ້ໃຫຍ່. ພວກເຮົາຊຸກຍູ້ການມີສ່ວນຮ່ວມຢ່າງຫ້າວຫັນ, ການຄິດຢ່າງມີເຫດ ແລະ ຜົນ ແລະ ການຮຽນຮູ້ດ້ວຍຕົນເອງ, ເພື່ອສົ່ງເສີມໃຫ້ສະມາຊິກໃນຊຸມຊົນມີຄວາມເຂັ້ມແຂງ ເປັນຕົວແທນຂອງການປ່ຽນແປງຢ່າງຫ້າວຫັນ.

ໂຄງການຖືກອອກແບບໃຫ້ມີຄວາມມ່ວນຊື່ນ ແລະ ການມີສ່ວນຮ່ວມ ໂດຍມີກອງປະຊຸມປະຕິບັດ ແລະ ການຝຶກອົບຮົມ ທີ່ອອກແບບເພື່ອຕອບສະໜອງຄວາມສົນໃຈ ແລະ ສິ່ງທ້າທາຍສະເພາະຂອງສະມາຊິກໃນຊຸມຊົນ. ການອອກແບບປັບແຕ່ງແບບສະເພາະນີ້ຊ່ວຍສົ່ງເສີມຄວາມຮູ້ສຶກເປັນເຈົ້າການ ແລະ ຄວາມມຸ່ງໝັ້ນ ນຳໄປສູ່ຜົນໄດ້ຮັບທີ່ມີຄວາມໝາຍຫຼາຍຂຶ້ນ.

### ລາຍງານການຈັດອັນດັບຊຸມຊົນ: ການຂະຫຍາຍສຽງ

ພາກສ່ວນທີ່ສຳຄັນຂອງໂຄງການແມ່ນ „ບົດລາຍງານການຈັດອັນດັບຊຸມຊົນ“, ເຊິ່ງເປັນເຄື່ອງມືທີ່ງ່າຍດາຍແຕ່ມີບົດບາດຊ່ວຍໃຫ້ຊຸມຊົນສະແດງອອກເຖິງຄວາມກັງວົນຂອງເຂົາເຈົ້າ. ບົດລາຍງານນີ້ກະຕຸ້ນໃຫ້ສະມາຊິກຊຸມຊົນແບ່ງປັນຄວາມຄິດເຫັນ, ຄວາມຕ້ອງການ ແລະ ຄວາມຫວັງຂອງເຂົາເຈົ້າ, ສ້າງພື້ນທີ່ປອດໄພສຳລັບການປຶກສາຫາລືທົ່ວໄປ. ໂດຍການນຳໃຊ້ຂໍ້ສະເໜີແນະໃນແຜນງານຂອງໂຄງການ, ພວກເຮົາໝັ້ນໃຈໄດ້ວ່າສູນການຮຽນຮູ້ຕະຫຼອດຊີວິດຈະຕອບສະໜອງຄວາມຕ້ອງການທີ່ປ່ຽນແປງໄປຂອງຊຸມຊົນ.



ຜູ້ເຂົ້າຮ່ວມໂຄງການສຳເລັດຈາກຫຼັກສູດການຝຶກອົບຮົມ

ເຄື່ອງມືການເຮັດວຽກຮ່ວມກັນນີ້ ສົ່ງເສີມຄວາມຮັບຜິດຊອບ ແລະ ຄວາມໂປ່ງໃສ, ຊ່ວຍໃຫ້ສະມາຊິກຊຸມຊົນສາມາດກຳນົດເສັ້ນທາງການເຄື່ອນໄຫວດ້ານການສຶກສາຂອງເຂົາເຈົ້າຢ່າງມີປະສິດທິພາບ. ຊ່ວຍເສີມສ້າງຄວາມຜູກພັນໃນຊຸມຊົນ ແລະ ສ້າງຄວາມໄວ້ວາງໃຈໃນສະຖາບັນທ້ອງຖິ່ນ, ສ້າງຄວາມຮູ້ສຶກເປັນເຈົ້າຂອງ ແລະ ມີຄວາມຮັບຜິດຊອບຮ່ວມກັນ.

## ການເຊື່ອມຕໍ່ດີຈິຕອນຜ່ານ Telegram

ໃນຍຸກດີຈິຕອນປະຈຸບັນນີ້, ເຕັກໂນໂລຢີມີບົດບາດສຳຄັນໃນການສື່ສານ ແລະ ການເຮັດວຽກຮ່ວມກັນ. ເພື່ອຍົກລະດັບການເຊື່ອມຕໍ່ລະຫວ່າງຜູ້ເຂົ້າຮ່ວມ ພວກເຮົາໄດ້ສ້າງກຸ່ມ Telegram ຂຶ້ນເພື່ອເປັນແພັດຟອມ (Platform) ຫຼັກສຳລັບການແລກປ່ຽນຄວາມຮູ້ ແລະ ປະສົບການ. ຊຸມຊົນອອນລາຍນີ້ອະນຸຍາດໃຫ້ສະມາຊິກສາມາດແລກປ່ຽນຊັບພະຍາກອນ, ແນວທາງການປະຕິບັດທີ່ດີທີ່ສຸດ ແລະ ປະສົບການການຮຽນຮູ້, ການສ້າງສະພາບແວດລ້ອມການເຮັດວຽກຮ່ວມກັນທີ່ຫຼາຍກວ່າການປະຊຸມແບບປົກກະຕິ.

ກຸ່ມ Telegram ໄດ້ກາຍເປັນພື້ນທີ່ສຳຄັນສຳລັບການມີສ່ວນຮ່ວມ ທີ່ສະມາຊິກຊຸມຊົນສະໜັບສະໜູນເຊິ່ງກັນ ແລະ ກັນ, ສະເຫຼີມສະຫຼອງຜົນສຳເລັດ ແລະ ແບ່ງປັນສິ່ງທ້າທາຍ. ການເຊື່ອມຕໍ່ດີຈິຕອນນີ້ຊ່ວຍຍົກລະດັບການຮຽນຮູ້ ແລະ ການສົ່ງເສີມເຄືອຂ່າຍທີ່ເຂັ້ມແຂງຂອງຜູ້ສະໜັບສະໜູນທີ່ເຂັ້ມແຂງ ທີ່ມີເປົ້າໝາຍເພື່ອການພັດທະນາຊຸມຊົນແບບຍືນຍົງ.

## ການຈັດຕັ້ງປະຕິບັດໂຄງການທົດລອງ

ໂຄງການທົດລອງ ໄດ້ເລີ່ມຈັດຕັ້ງປະຕິບັດ ໃນປີ 2021, ໂດຍມີຈຸດປະສົງເພື່ອສົ່ງເສີມການຮຽນຮູ້ຊຸມຊົນ ຫ້າ ແຫ່ງ ແລະ ຫ້າ ສູນໄວໜຸ່ມທີ່ຢູ່ພາຍພາຍໃຕ້ການຊີ້ນຳຂອງລັດຖະບານ. ແນວທາງແມ່ນການນຳໃຊ້ຊັບພະຍາກອນທີ່ມີຢູ່ໃຫ້ເກີດປະໂຫຍດສູງສຸດ ເພື່ອໃຫ້ໝັ້ນໃຈວ່າຄວາມພະຍາຍາມຂອງພວກເຮົາມີຄວາມຍືນຍົງ ແລະ ມີປະສິດທິຜົນ.

ໂຄງການລິເລີ່ມສ້າງຂີດຄວາມສາມາດຂອງພວກເຮົາປະກອບມີຫຼາກຫຼາຍໂຄງການທີ່ອອກແບບມາເພື່ອສ້າງຄວາມເຂັ້ມແຂງໃຫ້ແຕ່ລະບຸກຄົນ. ໂຄງການເຫຼົ່ານີ້ສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນ, ການໃຫ້ຄຳປຶກສາ ແລະ ສະໜັບສະໜູນ, ເສີມຂະຫຍາຍໂອກາດທາງດ້ານເສດຖະກິດ ແລະ ການຝຶກອົບຮົມທັກສະດີຈິຕອນ. ແຕ່ລະອົງປະກອບມີສ່ວນຊ່ວຍໃນການສ້າງແນວທາງແບບລວມສູນເພື່ອການເຕີບໂຕຂອງຊຸມຊົນ.

## ຜົນໄດ້ຮັບ ແລະ ຜົນກະທົບ

ໃນຂະນະທີ່ໂຄງການກຳລັງດຳເນີນ, ພວກເຮົາເຫັນໄດ້ການປ່ຽນແປງໃນແງ່ບວກດ້ານທັດສະນະຄະຕິ ແລະ ການມີສ່ວນຮ່ວມຂອງຊຸມຊົນ. ຜູ້ເຂົ້າຮ່ວມລາຍງານວ່າມີຄວາມຮູ້ສຶກໝັ້ນໃຈຫຼາຍຂຶ້ນໃນການສະແດງ



ຜະລິດຕະພັນ ຈາກສູນການຮຽນຮູ້ ຕະຫຼອດຊີວິດ



ຫ້ອງຮຽນດີຈິຕອນ ໃນສູນການຮຽນຮູ້ ຕະຫຼອດຊີວິດ

ຄວາມຄິດເຫັນກ່ຽວກັບຄວາມຕ້ອງການຂອງເຂົາເຈົ້າ. ສັງເກດໄດ້ ສິບ ສູນການຮຽນຮູ້ຕະຫຼອດຊີວິດ ມີ ສາມ ສູນ ໄດ້ຮັບການຮັບຮູ້ຢ່າງເປັນທາງການຈາກກະຊວງສຶກສາທິການ, ເຊິ່ງເປັນຂີດໝາຍທີ່ສຳຄັນໃນພາລະກິດຂອງພວກເຮົາໃນການສົ່ງເສີມໂອກາດດ້ານການສຶກສາ ແລະ ໜຶ່ງໃນສູນເຫຼົ່ານີ້ໄດ້ກາຍເປັນສູນແບບຢ່າງໃນປະເທດ, ຊຸກຍູ້ໃຫ້ສູນແຫ່ງອື່ນມີຄວາມມຸ່ງໝັ້ນໃນການສະໜັບສະໜູນຊຸມຊົນ. ໃນປະຈຸບັນສູນເຫຼົ່ານີ້ ຫຼາຍແຫ່ງໄດ້ການເປັນກະບອກສຽງຫຼັກໃນຊຸມຊົນ ແລະ ນຳສະເໜີບັນດາຄວາມຕ້ອງການ ແລະ ຂໍ້ກັງວົນຂອງຊຸມຊົນເຂົ້າໃນການສົນທະນາເປີດກວ້າງໃນລະດັບທ້ອງຖິ່ນໄດ້ຢ່າງມີປະສິດທິພາບ.

ຕັ້ງແຕ່ປີ 2024 ໄດ້ມີສູນຮຽນຮູ້ເພີ່ມຂຶ້ນອີກ 9 ແຫ່ງທີ່ຮ່ວມກັບໂຄງການລິເລີ່ມຂອງພວກເຮົາ, ໃນປະຈຸບັນມີສູນການຮຽນຮູ້ທັງໝົດ 19 ແຫ່ງ ໃນທົ່ວປະເທດທີ່ເຮັດວຽກກັບ ດີວີວີ ອິນເຕີເນເຊິນແນວ. ການຂະຫຍາຍຕົວນີ້ຈະເປັນການເສີມສ້າງເຄືອຂ່າຍຂອງພວກເຮົາ ແລະ ພັດທະນາຄວາມອາດສາມາດໃນການໃຫ້ບໍລິການຊຸມຊົນຢ່າງມີປະສິດທິພາບ.

ການປະສົມປະສານຄວາມຄິດເຫັນຈາກຊຸມຊົນຜ່ານ "ບົດລາຍງານການຈັດອັນດັບຊຸມຊົນ" ຊ່ວຍປັບປຸງການຕອບສະໜອງຂອງສູນການຮຽນຮູ້ຕະຫຼອດຊີວິດ. ວິທີການແບບປະສົມປະສານຂອງພວກເຮົາໃນການສ້າງຂີດຄວາມສາມາດ - ເຊິ່ງນຳສະເໜີການຝຶກອົບຮົມທັງທາງອອນລາຍ ແລະ ແບບເຫັນໜ້າ - ຊ່ວຍໃຫ້ທຸກຄົນສາມາດເຂົ້າເຖິງໂຄງການຂອງພວກເຮົາໄດ້, ໂດຍສະເພາະຜູ້ທີ່ຢູ່ໃນເຂດຫ່າງໄກສອກຫຼີກ. ການໃຫ້ຄຳແນະນຳ ແລະ ການໃຫ້ຄຳປຶກສາແມ່ນສຳຄັນຫຼາຍ ເພື່ອຊ່ວຍໃຫ້ຜູ້ເຂົ້າຮ່ວມສາມາດນຳເອົາທັກສະໃໝ່ໆ ທີ່ໄດ້ຮຽນມາໄປນຳໃຊ້.

## ຄວາມມຸ່ງໝັ້ນໃນການພັດທະນາຢ່າງຕໍ່ເນື່ອງ

ໃນຂະນະທີ່ພວກເຮົາເບິ່ງໃນອະນາຄົດ, ດີວີວີ ອິນເຕີເນເຊິນແນວ ຍັງຄົງມຸ່ງໝັ້ນທີ່ຈະປັບຍຸດທະສາດຂອງພວກເຮົາ ໂດຍອີງໃສ່ການປະເມີນຜົນຢ່າງຕໍ່ເນື່ອງ ແລະ ຄວາມຄິດເຫັນຈາກຊຸມຊົນ. ພວກເຮົາເນັ້ນໜັກໃສ່ການສ້າງຄວາມອາດສາມາດ, ການໃຫ້ຄຳປຶກສາ ແລະ ຄວາມຍືນຍົງເພື່ອຮັບປະກັນວ່າພວກເຮົາຈະສາມາດຕອບສະໜອງຄວາມຕ້ອງທີ່ຮີບດ່ວນ ຄຽງຄູ່ໄປພ້ອມກັບວາງພື້ນຖານທີ່ແຂງແຮງສຳລັບການພັດທະນາຊຸມຊົນໃນໄລຍະຍາວ.

ໃນຮູບພາບທີ່ສົດໃສນີ້, ໂຄງການທົດລອງຂອງ ດີວີວີ ອິນເຕີເນເຊິນແນວ ເປັນດັ່ງສັນຍານແຫ່ງຄວາມຫວັງ, ສະແດງໃຫ້ເຫັນເຖິງພະລັງຂອງການສົ່ງເສີມທີ່ອ່ອນໂຍນ. ໂດຍການປູກຝັງວັດທະນະທຳແຫ່ງການຮຽນຮູ້ ແລະ ການຮ່ວມມືຢ່າງຕໍ່ເນື່ອງ, ພວກເຮົາເສີມສ້າງຄວາມຢືດຢຸ່ນຂອງຊຸມຊົນ ແລະ ປູທາງໃຫ້ແກ່ການພັດທະນາແບບຍືນຍົງໃນທົ່ວປະເທດກຳປູເຈຍ.

# ສປປ ລາວ ຂັບເຄື່ອນແຜນການຮຽນຮູ້ຕະຫຼອດຊີວິດຂ້າມຂະແໜງການ

*ມານະ ຈັນທະບາລານິນ*
ດີວີວີ ອິນເຕີເນເຊິນແນວ, ລາວ

ເພື່ອໃຫ້ສອດຄ່ອງກັບເປົ້າໝາຍການສຶກສາທົ່ວໂລກ ແລະ ຍຸດທະສາດການພັດທະນາໃນໄລຍະຍາວຂອງ ສປປ ລາວ. ໃນປະຈຸບັນແມ່ນກຳລັງດຳເນີນຂັ້ນຕອນການປະສານງານເພື່ອເສີມສ້າງການຮຽນຮູ້ຕະຫຼອດຊີວິດ. ດ້ວຍການສະໜັບສະໜູນດ້ານການເມືອງລະດັບສູງ ແລະ ເພີ່ມທະວີການຮ່ວມມືລະຫວ່າງກະຊວງ, ລັດຖະບານໄດ້ສະຫຼຸບ ແລະ ຮັບຮອງເອົາແຜນການປະຕິບັດງານແຫ່ງຊາດເພື່ອການຮຽນຮູ້ຕະຫຼອດຊີວິດ (NAP for LLL).

## ການສ້າງຂອບການປະຕິບັດງານແຫ່ງຊາດທີ່ເປັນເອກະພາບ

ນັບຕັ້ງແຕ່ການອະນຸມັດດຳລັດວ່າກການານຮຽນຮູ້ຕະຫຼອດຊີວິດ ໂດຍນາຍົກລັດຖະມົນຕີໃນເດືອນມີນາ 2020, ແມ່ນໄດ້ມີຄວາມຄືບໜ້າຢ່າງຕໍ່ເນື່ອງໃນການລວມເອົາ ການຮຽນຮູ້ຕະຫຼອດຊີວິດ ເຂົ້າໃນໂຄງການຂອງລັດຖະບານທີ່ມີຢູ່. ເພື່ອຂະຫຍາຍຄວາມພະຍາຍາມດັ່ງກ່າວໃນຂອບເຂດທົ່ວປະເທດ ແລະ ຮັບປະກັນຄວາມຄືບໜ້າທີ່ສອດຄ່ອງໃນທຸກພາກສ່ວນຂອງລັດຖະບານ, ລັດຖະບານລາວ ໄດ້ສ້າງຕັ້ງຄະນະສະເພາະກິດຂ້າມຂະແໜງການທີ່ຕັ້ງຊື່ເປັນຄະນະຊີ້ນຳດ້ານວິຊາການເພື່ອການຮຽນຮູ້ຕະຫຼອດຊີວິດ. ໜ່ວຍງານນີ້ແມ່ນຮັບຜິດຊອບໃນການຮ່າງແຜນດຳເນີນງານແຫ່ງຊາດເພື່ອການຮຽນຮູ້ຕະຫຼອດຊີວິດ ເພື່ອເປັນຂອບຍຸດທະສາດໃນການປະຕິບັດຕົວຈິງໃນທົ່ວກະຊວງ ແລະ ສະຖາບັນ. ວິທີການນີ້ເຮັດໃຫ້ລັດຖະບານສາມາດຮັບປະກັນວ່າ ການຮຽນຮູ້ຕະຫຼອດຊີວິດ ຈະກາຍເປັນພາກສ່ວນໜຶ່ງໃນການວາງແຜນລະດັບຊາດ, ເຊິ່ງສອດຄ່ອງຢ່າງໃກ້ຊິດກັບບູລິມະສິດຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ (NSEDP). ຂໍ້ລິເລີ່ມດັ່ງກ່າວໄດ້ຊີ້ໃຫ້ເຫັນຄວາມເຊື່ອທີ່ວ່າ ການຮຽນຮູ້ຕະຫຼອດຊີວິດ ເປັນສິ່ງຈຳເປັນສຳລັບການຫັນປ່ຽນເສດຖະກິດ, ຄວາມສາມັກຄີໃນສັງຄົມ ແລະ ການເຕີບໂຕແບບຍືນຍົງ. ອົງປະກອບທີ່ສຳຄັນໃນຂະບວນການນີ້ແມ່ນບົດບາດຂອງຄະນະຊີ້ນຳແຫ່ງຊາດຂອງ ການຮຽນຮູ້ຕະຫຼອດຊີວິດ ເຊິ່ງຄາດວ່າຈະຮັບປະກັນການປະສານງານຢ່າງເຂັ້ມແຂງ, ຊຸກຍູ້ການມີສ່ວນພົວພັນໃນທຸກຂັ້ນ ແລະ ສະໜັບສະໜູນການພັດທະນາບັນດານະໂຍບາຍ ແລະ ບັນດາໂຄງການ.

ຄວາມສຳເລັດຄັ້ງສຳຄັນໃນຂະບວນການນີ້ແມ່ນກອງປະຊຸມຄະນະຊີ້ນຳລະດັບສູງຄັ້ງທຳອິດທີ່ຈັດຂຶ້ນໃນເດືອນມີນາ ປີ 2025. ກອງປະຊຸມດັ່ງກ່າວ, ມີຜູ້ແທນ 60 ກວ່າທ່ານ ຈາກອົງການຈັດຕັ້ງຂອງລັດຖະບານ, ໂດຍການເປັນປະທານຂອງລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ. ກອງປະຊຸມຄັ້ງນີ້ຖືເປັນການທົບທວນ ແລະ ອະນຸມັດແຜນປະຕິບັດງານແຫ່ງຊາດສຳລັບການຮຽນຮູ້ຕະຫຼອດຊີວິດ ເຊິ່ງເປັນອົງປະກອບຫຼັກຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ.

## ອົງປະກອບຫຼັກຂອງແຜນປະຕິບັດງານແຫ່ງຊາດສຳລັບການຮຽນຮູ້ຕະຫຼອດຊີວິດ

ໃນລະຫວ່າງກອງປະຊຸມ, ຄະນະເລຂາທິການການຮຽນຮູ້ຕະຫຼອດຊີວິດທີ່ຕັ້ງຢູ່ໃນກົມການສຶກສານອກໂຮງຮຽນໄດ້ສະເໜີແຜນປະຕິບັດງານແຫ່ງຊາດສຳລັບການຮຽນຮູ້ຕະຫຼອດຊີວິດ. ແຜນດັ່ງກ່າວໄດ້ລະບຸເຖິງການດຳເນີນການເຄື່ອນໄຫວນະໂຍບາຍທີ່ເປັນຮູບປະທຳ, ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ ແລະ ຍຸດທະສາດການປະຕິບັດທີ່ຖືກອອກແບບເພື່ອຮັບປະກັນ:

- ການເຂົ້າເຖິງໂອກາດດ້ານການສຶກສາ
- ການພັດທະນາອຸປະກອນ ສື່ການຮຽນການສອນ
- ເພີ່ມທະວີລະບົບການຕິດຕາມ ແລະ ການຄຸ້ມຄອງ
- ການລົງທຶນພັດທະນາຊັບພະຍາກອນມະນຸດ
- ການນຳໃຊ້ເຄື່ອງມືດິຈິຕອນຢ່າງກວ້າງຂວາງ ແລະ ຮູບແບບການຮຽນຮູ້ທີ່ມີຄວາມຍືດຍຸ່ນ

ຄະນະກຳມະການໄດ້ເນັ້ນໜັກເຖິງຄວາມສຳຄັນຂອງການຮ່ວມມືໃນທົ່ວທຸກກະຊວງ ແລະ ຂັ້ນລັດຖະບານ ເພື່ອຮັບປະກັນ ຄວາມສຳເລັດ ແລະ ໂອກາດການຮຽນຮູ້ທີ່ມີຄວາມໝາຍໃຫ້ແກ່ພົນລະເມືອງລາວທຸກຄົນ.

## ແຜນປະຕິບັດງານແຫ່ງຊາດສຳລັບການຮຽນຮູ້ຕະຫຼອດຊີວິດ 2025-2030 ກຳນົດແນວທາງສຳລັບແຕລະຂະແໜງການ

ການຮັບຮອງເອົາແຜນການເຄື່ອນໄຫວແຫ່ງຊາດເພື່ອການຮຽນຮູ້ຕະຫຼອດຊີວິດ ເປັນຂີດໝາຍສຳຄັນໃນວາລະການສຶກສາ ແລະ ພັດທະນາຂອງປະເທດ. ໃນໄລຍະປີ 2025-2030, ປະຈຸບັນ, ແຜນການດັ່ງກ່າວຈະໄດ້ແຈກຢາຍໄປທົ່ວທຸກຂະແໜງການ ເພື່ອຊີ້ນຳການປະຕິບັດຂໍ້ລິເລີ່ມການຮຽນຮູ້ຕະຫຼອດຊີວິດ. ແຜນການດັ່ງກ່າວຍັງໄດ້ພິມເຜີຍແຜ່ຢ່າງເປັນທາງການ ແລະ ຈະເປັນເອກະສານອ້າງອີງແຫ່ງຊາດ ເພື່ອສະໜັບສະໜູນການສ້າງສັງຄົມການຮຽນຮູ້ຕະຫຼອດຊີວິດໃນທົ່ວ ສປປ ລາວ. ຂັ້ນຕອນຕໍ່ໄປແມ່ນການພັດທະນາແຜນການສະເພາະຂະແໜງການ.



ກອງປະຊຸມຄະນະຊີ້ນຳລະດັບສູງຂອງແຜນປະຕິບັດງານແຫ່ງຊາດເພື່ອການຮຽນຮູ້ຕະຫຼອດຊີວິດ

# EdApp - ການຮຽນຮູ້ແບບດິຈິຕອລ ໃນການສຶກສານອກໂຮງຮຽນຂອງປະເທດລາວ

## *ຜົນໄດ້ຮັບທີ່ດີຈາກໄລຍະການທົດລອງ*



*ປ່າກູ້ລີ ໄຊຍະຊ້າງ*
ດີວີວີ ອິນເຕີເນເຊີນແນວ, ລາວ

ສູນພັດທະນາການສຶກສານອກໂຮງຮຽນ (ສພນ) ແລະ ກົມການສຶກສານອກໂຮງຮຽນ (ກສນ) ໄດ້ສຳເລັດໄລຍະທົດລອງຂອງແພຼັດຟອມ (Platform) ການຮຽນຮູ້ດິຈິຕອລ EdApp ກັບນັກຮຽນຊັ້ນມັດທະຍົມ ປີທີ 7 (ມ 7) ໃນ 4 ແຂວງເປົ້າໝາຍໃນ ສປປ ລາວ. ຜົນໄດ້ຮັບໃນເບື້ອງຕົ້ນຊີ້ໃຫ້ເຫັນເຖິງການຍອມຮັບຢ່າງແຂງແຮງຂອງນັກຮຽນ ແລະ ຊີ້ໃຫ້ເຫັນທ່າແຮງຂອງເຄື່ອງມືດິຈິຕອນ ເພື່ອປະຕິວັດການສຶກສານອກໂຮງຮຽນໃນ ສປປ ລາວ.

### ຂໍ້ມູນດ້ານປະຊາກອນຂອງຜູ້ຮຽນ

ຈຳນວນຜູ້ຮຽນທັງໝົດ 125 ຄົນ ເຂົ້າຮ່ວມໃນການສຳຫຼວດຜູ້ໃຊ້, ຜູ້ໃຊ້ 90.4% ລາຍງານວ່າໄດ້ນຳໃຊ້ແພຼັດຟອມຢ່າງຕໍ່ເນື່ອງ. ການແຈກຂອງຜູ້ໃຊ້ແບ່ງຕາມເພດແມ່ນມີຄວາມສົມດູນ. ໃນຂະນະທີ່ຜູ້ໃຊ້ທັງໝົດແມ່ນໄດ້ລົງທະບຽນເຂົ້າຮຽນໃນຊັ້ນ ມ 7, ການແຈກຢາຍດ້ານອາຍຸຂອງຜູ້ໃຊ້ສະທ້ອນໃຫ້ເຫັນເຖິງຄວາມເປັນຈິງຂອງ ກສນ: 75.2% ມີອາຍຸລະຫວ່າງ 17 ຫາ 21 ປີ, 15% ແມ່ນອາຍຸ 22 ຫາ 30 ປີ, ແລະ 10% ມີອາຍຸຫຼາຍກວ່າ 30 ປີ. ດັ່ງນັ້ນ, EdApp ແມ່ນເປັນປະໂຫຍດໂດຍສະເພາະສຳລັບນັກຮຽນຜູ້ໃຫຍ່ທີ່ກັບມາຮຽນຄືນ. EdApp ຊ່ວຍໃຫ້ເຂົ້າເຖິງສື່ການຮຽນຮູ້ດິຈິຕອນໄດ້ໃນເວລາທີ່ບໍ່ສາມາດເຂົ້າຫ້ອງຮຽນ, ການປັບປຸງຄວາມສົມດູນລະຫວ່າງການເຮັດວຽກ ແລະ ເຂົ້າໂຮງຮຽນ.

### ການມີສ່ວນຮ່ວມ ແລະ ຂໍ້ສະເໜີແນະຈາກຜູ້ໃຊ້

- ໂອກາດການຮຽນຮູ້ທີ່ຢືດຢຸ່ນ: ຫຼາຍກວ່າເຄິ່ງໜຶ່ງ (53.1%) ໄດ້ລາຍງານວ່າໄດ້ນຳໃຊ້ EdApp ສອງຫາສາມເທື່ອຕໍ່ອາທິດ, ສ່ວນຫຼາຍແມ່ນໃນຮອບສັ້ນໆ ເປັນເວລາ 15-20 ນາທີ. ຄວາມຢືດຢຸ່ນນີ້ - ຊ່ວຍໃຫ້ການຮຽນຮູ້ໄດ້ „ທຸກເວລາ, ທຸກສະຖານທີ່" - ໄດ້ຖືກກ່າວເຖິງເລື້ອຍໆ ວ່າເປັນຈຸດແຂງທີ່ສຳຄັນ.

- ເສີມສ້າງຄວາມເປັນເອກະລາດ: EdApp ພິສູດວ່າເປັນເຄື່ອງມືທີ່ມີປະສິດທິພາບສຳລັບການຮຽນຮູ້ດ້ວຍຕົນເອງ. ຜູ້ຮຽນສ່ວນຫຼາຍໃຊ້ແອັບສຳລັບວຽກຕ່າງໆ ເຊັ່ນ: ການຊອກຫາຂໍ້ມູນ, ສະໜັບສະໜູນການຮຽນຂອງເຂົາເຈົ້າ ແລະ ການເຮັດວຽກບ້ານໃຫ້ສຳເລັດ ເຊິ່ງສະທ້ອນໃຫ້ເຫັນເຖິງຜົນປະໂຫຍດຂອງມັນໃນການສົ່ງເສີມການຮຽນຮູ້ດ້ວຍຕົນເອງ.

- ເນື້ອໃນທີ່ໜ້າສົນໃຈ: ການໃຊ້ຄຸນນະສົມບັດແບບໂຕ້ຕອບ, ຮູບພາບ ແລະ ວິດີໂອຂອງແອັບ ເພື່ອເພີ່ມທັງແຮງຈູງໃຈ ແລະ ຄວາມເຂົ້າໃຈຂອງຜູ້ຮຽນ.

- ປັບປຸງຍຸດທະສາດການຮຽນຮູ້ທີ່ດີຂຶ້ນ: ຜູ້ຕອບແບບສອບຖາມລາຍງານວ່າ ແອັບຊ່ວຍໃຫ້ເຂົ້າໃຈເນື້ອໃນບົດຮຽນໄດ້ດີຂຶ້ນ ແລະ ສະໜັບສະໜູນທັກສະການບໍລິຫານເວລາຂອງເຂົາເຈົ້າ.

ຜູ້ຮຽນສ່ວນຫຼາຍ (96.5%) ເຂົ້າເຖິງ EdApp ຜ່ານສະມາດໂຟນ, ຕົ້ນຕໍແມ່ນເຊື່ອມຕໍ່ດ້ວຍມືຖືສ່ວນຕົວ. ອັນນີ້ຊີ້ໃຫ້ເຫັນເຖິງຄວາມສຳຄັນຂອງເທັກໂນໂລຍີມືຖືໃນການຫຼຸດຊ່ອງຫວ່າງການເຂົ້າເຖິງການສຶກສາ, ໂດຍສະເພາະໃນເຂດຊົນນະບົດ ຫຼື ເຂດຫ່າງໄກສອກຫຼີກ.

### ຂໍ້ມູນທີ່ສຳຄັນເພື່ອການພັດທະນາ

ນອກຈາກຜົນການວິໄຈໃນທາງບວກແລ້ວ, ຜູ້ຮຽນໄດ້ແບ່ງປັນຄຳຄິດຄຳເຫັນໃນທາງສ້າງສັນສຳລັບການປັບປຸງໃນອະນາຄົດ. ຂໍ້ສະເໜີແນະແມ່ນລວມທັງການເພີ່ມຮູບແບບກິດຈະກຳໃຫ້ຫຼາກຫຼາຍຂຶ້ນ, ການເພີ່ມຕົວຢ່າງເພື່ອຄວາມຊັດເຈນຂອງເນື້ອໃນ ແລະ ຂະຫຍາຍຂອບເຂດຂອງເນື້ອໃນສຳລັບວິດີໂອ. ນອກນັ້ນຍັງມີການສັງເກດເຫັນບັນຫາດ້ານເຕັກນິກ ເຊັ່ນ: ການເຂົ້າເຖິງອິນເຕີເນັດທີ່ບໍ່ສອດຄ່ອງ ແລະ ຄວາມຈຳເປັນໃນການນຳໃຊ້ແອັບໃຫ້ໃຊ້ງານໄດ້ງ່າຍຂຶ້ນ.

ການທົດລອງນຳໃຊ້ ໄດ້ສະແດງໃຫ້ເຫັນວ່າ EdApp ສາມາດສະໜັບສະໜູນການຮຽນຮູ້ທີ່ມີຄວາມຢືດຢຸ່ນ ແລະ ເຂົ້າເຖິງໄດ້ຢ່າງມີປະສິດທິພາບ ພາຍໃນສະພາບເງື່ອນໄຂຂອງວຽກງານການສຶກສານອກໂຮງຮຽນ. ຄຳຄິດຄຳເຫັນທີ່ເກັບກຳໃນໄລຍະນີ້ ແມ່ນຈະຖືກນຳໄປໃຊ້ໃນການພັດທະນາໃນຂັ້ນຕໍ່ໄປ.

### ການກຳນົດທິດທາງໃນໄລຍະຕໍ່ໄປ

ຄວາມກະຕືລືລົ້ນ ແລະ ການມີສ່ວນຮ່ວມໃນທາງບວກຈາກນັກຮຽນ ກສນ ຊັ້ນ ມ 7 ສະແດງໃຫ້ເຫັນເຖິງພະລັງແຫ່ງການປ່ຽນແປງຂອງ EdApp ຢ່າງຊັດເຈນ. ໂດຍສະເພາະ, ການຮັບຮູ້ຢ່າງແຂງຂັນຂອງຜູ້ເຂົ້າຮ່ວມໄວໜຸ່ມໄດ້ຊີ້ໃຫ້ເຫັນເຖິງການເປີດກວ້າງຂອງຄົນລຸ້ນໃໝ່ຕໍ່ກັບແນວທາງການຮຽນຮູ້ຜ່ານທີ່ແອັບທັນສະໄໝ. ອີງໃສ່ຜົນໄດ້ຮັບໃນທາງບວກເຫຼົ່ານີ້, ສພນ ວາງແຜນທີ່ຈະສືບຕໍ່ປັບປຸງ EdApp ແລະ ຄົ້ນຫາທາງເລືອກໃນການຂະຫຍາຍການນຳໃຊ້ໃນຂົງເຂດອື່ນໆ ໃນວຽກງານການສຶກສານອກໂຮງຮຽນ. ການທົດລອງໄດ້ໃຫ້ພື້ນຖານອັນແຂງແກ່ນສຳລັບການເຊື່ອມໂຍງຂອງເຄື່ອງມືດິຈິຕອນເຂົ້າໄປໃນລະບົບຂອງການສຶກສານອກໂຮງຮຽນ ແລະ ຊີ້ໃຫ້ເຫັນເຖິງບົດບາດທີ່ເພີ່ມຂຶ້ນຂອງການຮຽນຮູ້ຜ່ານມືຖືໃນການເຂົ້າເຖິງ ແລະ ສ້າງຄວາມເຂັ້ມແຂງຂອງນັກຮຽນໃນທົ່ວປະເທດ.



ການຮຽນຮູ້ດິຈິຕອນ ໃນຊັ້ນ ມ 7 ຜ່ານ ການນຳໃຊ້ EdApp



# ເສີມສ້າງການຮຽນຮູ້ຕະຫຼອດຊີວິດໃນຂະແໜງການສ້າງຄູ ໃນ ສປປ ລາວ

## *ປື້ມຄູ່ມືສໍາລັບຄູອະນຸບານ, ປະຖົມ ແລະ ມັດທະຍົມສຶກສາ*

*ຂັນທອງ ອິນທະຈັກ*
ດີວີວີ ອິນເຕີເນເຊີນແນວ, ລາວ

ຄວາມກ້າວໜ້າຄັ້ງສໍາຄັນໄດ້ເກີດຂຶ້ນແລ້ວ ໃນການຊຸກຍູ້ສົ່ງເສີມການຮຽນຮູ້ຕະຫຼອດຊີວິດ ໃນລະບົບການສຶກສາຄູໃນ ສປປ ລາວ. ໃນເດືອນເມສາ 2025, ບັນດາພາກສ່ວນກ່ຽວຂ້ອງທີ່ສໍາຄັນຈາກມະຫາວິທະຍາໄລ, ວິທະຍາໄລສ້າງຄູ ແລະ ອົງການຈັດຕັ້ງການສຶກສາຂອງລັດຖະບານ ໄດ້ມາເຕົ້າໂຮມກັນຢູ່ເມືອງວັງວຽງ ເພື່ອທົບທວນ ແລະ ຮັບຮອງປື້ມຄູ່ມືສະບັບຂອງ ການຮຽນຮູ້ຕະຫຼອດຊີວິດ ທີ່ອອກແບບສໍາລັບຫຼັກສູດສ້າງຄູອະນຸບານ ແລະ ຄູປະຖົມ.

### ຂະບວນການທົບທວນການຮ່ວມມື

ກອງປະຊຸມຄັ້ງນີ້ນໍາໂດຍ ທ່ານຮັກສາການຄະນະບໍດີຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ, ພ້ອມດ້ວຍຜູ້ຊ່ຽວຊານດ້ານການສຶກສາຜູ້ໃຫຍ່ ຈາກກະຊວງສຶກສາທິການ ແລະ ກິລາ. ພ້ອມນັ້ນ, ພວກເຂົາເຈົ້າໄດ້ຮ່ວມກັນນໍາພາຂະບວນການທົບທວນທີ່ກວມລວມ ແລະ ສະເໜີຄໍາແນະນໍາທີ່ມີຄຸນຄ່າ ເພື່ອຮັບປະກັນວ່າປື້ມຄູ່ມືຕອບສະໜອງຄວາມຕ້ອງການຂອງນັກການສຶກສາ ແລະ ຜູ້ຮຽນເຊັ່ນດຽວກັນ.

ໃນກອງປະຊຸມຄັ້ງນີ້ ມີບັນດາຜູ້ຕາງໜ້າຈາກຂະແໜງການຕ່າງໆ ເຂົ້າຮ່ວມກອງປະຊຸມ, ພ້ອມດ້ວຍຄະນະບໍດີຈາກ 4 ມະຫາວິທະຍາໄລຂອງລັດ, ຜູ້ອໍານວຍການວິທະຍາໄລສ້າງຄູ 8 ແຫ່ງ, ວິທະຍາໄລສ້າງຄູສິງ 2 ແຫ່ງ ແລະ ສະມາຊິກຜູ້ຊ່ຽວຊານການຮຽນຮູ້ຕະຫຼອດຊີວິດ ຂອງ ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ. ການມີສ່ວນຮ່ວມຢ່າງກວ້າງຂວາງນີ້ ໄດ້ເນັ້ນໃຫ້ເຫັນເຖິງການຮ່ວມມືຢ່າງແໜ້ນແຟ້ນໃນທົ່ວບັນດາສະຖາບັນ ເພື່ອແນໃສ່ປູກຝັງການຮຽນຮູ້ຕະຫຼອດຊີວິດເຂົ້າໃນການສຶກສາຄູໃນທົ່ວປະເທດ.

### ການພັດທະນາ ແລະ ການທົດລອງປື້ມຄູ່ມື

ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ໄດ້ຢູ່ໃນແຖວໜ້າໃນການສົ່ງເສີມການຮຽນຮູ້ຕະຫຼອດຊີວິດ ໃນຂະແໜງການສຶກສາຄູໂດຍການພັດທະນາສື່ການຮຽນທີ່ສໍາຄັນ. ເຊິ່ງລວມທັງປື້ມແບບຮຽນການຮຽນຮູ້ຕະຫຼອດຊີວິດສະບັບສົມບູນ ທີ່ກວມເອົາທຸກລະດັບການສຶກສາຄູ ທັງປະຖົມ, ມັດທະຍົມ ແລະ ອະນຸບານ, ລວມທັງປື້ມຄູ່ມືການຮຽນຮູ້ຕະຫຼອດຊີວິດ ສໍາລັບຄູມັດທະຍົມສຶກສາ. ໂດຍຮັບຮູ້ເຖິງຄວາມຕ້ອງການສະເພາະຂອງການ ສຶກສາໃນຊັ້ນອະນຸບານ ແລະ ປະຖົມສຶກສາ, ປື້ມຄູ່ມືເພີ່ມເຕີມສອງສະບັບທີ່ອອກແບບເພື່ອໃຫ້ເໝາະສົມກັບລະດັບເຫຼົ່ານີ້ ຈຶ່ງໄດ້ຖືກພັດທະນາໂດຍການຮ່ວມມືກັບສະຖາບັນສ້າງຄູ.



ກອງປະຊຸມປຶກສາຫາລືກ່ຽວກັບປື້ມຄູ່ມືການຮຽນຮູ້ຕະຫຼອດຊີວິດ ສໍາລັບການສຶກສາຄູອະນຸບານ ແລະ ປະຖົມ

ປື້ມຄູ່ມືເຫຼົ່ານີ້ໄດ້ຖືກທົດລອງຢູ່ໃນໜຶ່ງພາກຮຽນໃນບັນດາສະຖາບັນສ້າງຄູ ໃນປີ 2024, ເຊິ່ງຊ່ວຍໃຫ້ນັກການສຶກສາສາມາດໃຫ້ຄໍາຄິດເຫັນ ແລະ ຄໍາແນະນໍາການເພື່ອການປັບປຸງ. ໄລຍະທົດລອງແມ່ນສໍາຄັນຫຼາຍສໍາລັບການປັບປຸງເນື້ອໃນ ແລະ ເຮັດໃຫ້ປື້ມຄູ່ມືມີປະສິດທິພາບ ແລະ ໃຊ້ງານໄດ້ງ່າຍຂຶ້ນ. ການຮ່ວມມືຂອງຄວາມຄິດລິເລີ່ມນີ້ ເຮັດໃຫ້ໝັ້ນໃຈວ່າທັດສະນະທີ່ຫຼາກຫຼາຍຈາກສະຖາບັນການສຶກສາ ແລະ ຜູ້ຊ່ຽວຊານທີ່ແຕກຕ່າງກັນຈະສົ່ງຜົນຕໍ່ຄຸນນະພາບ ແລະ ຄວາມກ່ຽວຂ້ອງຂອງເນື້ອໃນ ທີ່ຢູ່ໃນສື່ການຮຽນການສອນນີ້. ແນວທາງນີ້ບໍ່ພຽງແຕ່ເສີມຂະຫຍາຍການຍອມຮັບຂອງປື້ມຄູ່ມືເທົ່ານັ້ນ, ແຕ່ຍັງສົ່ງເສີມການມີສ່ວນຮ່ວມຢ່າງຫ້າວຫັນຈາກບັນດາຄູອາຈານ ທີ່ຈະນໍາໃຊ້ຊັບພະຍາກອນ ເຫຼົ່ານີ້ໃນການພັດທະນາວິຊາຊີບຂອງພວກເຂົາ. ໂດຍອີງໃສ່ວຽກງານດັ່ງກ່າວ, ກອງປະຊຸມຄັ້ງທີ່ຜ່ານມານີ້ແມ່ນໄດ້ສຸມໃສ່ການສະຫຼຸບປື້ມຄູ່ມື ແລະ ກໍານົດຂັ້ນຕອນຕໍ່ໄປທີ່ເປັນຮູບປະທໍາ, ເຊິ່ງລວມທັງກອງປະຊຸມຕິດຕາມ ແລະ ຂັ້ນຕອນການອະນຸມັດ. ໃນກຸ່ມວິຊາການດັ່ງກ່າວໄດ້ຕົກລົງຮັບຮອງເອົາໂຄງສ້າງຂອງປື້ມຄູ່ມື, ເຊິ່ງໄດ້ສົ່ງເສີມ 9 ຫົວຂໍ້ຍຸດທະສາດທີ່ຈໍາເປັນສໍາລັບການຮຽນຮູ້ຕະຫຼອດຊີວິດໃນການສຶກສາຄູ.

ກອງປະຊຸມຄັ້ງນີ້ຍັງໄດ້ວາງຍຸດທະສາດສົ່ງເສີມຫຼັກສູດແຫ່ງຊາດໃນສະຖາບັນສ້າງຄູ, ແນໃສ່ເຮັດໃຫ້ລະບົບການຝຶກອົບຮົມຄູມີຄວາມສອດຄ່ອງ ແລະ ມີຄຸນນະພາບສູງໃນທົ່ວປະເທດລາວ. ການຈັດຕັ້ງປະຕິບັດຕາມຫຼັກສູດແຫ່ງຊາດນີ້ ຈະຊ່ວຍໃຫ້ການຝຶກອົບຮົມຄູມີຄວາມກ່ຽວຂ້ອງ ແລະ ໄດ້ມາດຕະຖານ ເຊິ່ງຈະຊ່ວຍຍົກສູງຄຸນນະພາບການສຶກສາທົ່ວປະເທດ ແລະ ສະໜັບສະໜູນເປົ້າໝາຍການສຶກສາແຫ່ງຊາດ.

### ບາດກ້າວສໍາຄັນສູ່ການພັດທະນາຄູໃນລາວ

ຜົນສໍາເລັດຮ່ວມກັນຄັ້ງນີ້ ຖືເປັນຂີດໝາຍອັນສໍາຄັນ ໃນການເສີມສ້າງການຮຽນຮູ້ຕະຫຼອດຊີວິດ ໃນຂະແໜງການສຶກສາຄູຂອງລາວ. ດ້ວຍວິໄສທັດຂອງ ດີວີວີ ອິນເຕີເນເຊີນແນວ, ຄວາມພະຍາຍາມເຫຼົ່ານີ້ຈະຊ່ວຍໃຫ້ໝັ້ນໃຈວ່າຄູໃນອະນາຄົດມີການກຽມພ້ອມທີ່ດີເພື່ອຕອບສະໜອງຄວາມຕ້ອງການດ້ານການສຶກສາທີ່ພວມພັດທະນາ ແລະ ປະກອບສ່ວນເຂົ້າໃນການພັດທະນາແບບຍືນຍົງໃນປະເທດ.

ໃນອະນາຄົດ, ການນໍາປື້ມຄູ່ມືເຫຼົ່ານີ້ໄປປະຕິບັດໃຫ້ສໍາເລັດຜົນແມ່ນຄາດວ່າຈະເປັນແບບຢ່າງໃນການປະຕິຮູບ ແລະ ນະວັດຕະກໍາທາງດ້ານການສຶກສາ, ເພື່ອສົ່ງເສີມວັດທະນະທໍາແຫ່ງການຮຽນຮູ້ຕະຫຼອດຊີວິດຂອງນັກການສຶກສາ. ການສືບຕໍ່ສະໜັບສະໜູນ ແລະ ການຮ່ວມມືລະຫວ່າງບັນດາພາກສ່ວນກ່ຽວຂ້ອງ ໃນວຽກງານການສຶກສາຈະມີຄວາມສໍາຄັນຫຼາຍ ເພື່ອເປັນແຮງສະໜັບສະໜູນ ແລະ ສ້າງຜົນກະທົບທີ່ຍືນຍົງ.



# ແນວທາງການສ້າງລະບົບການຮຽນຮູ້ ແລະ ການສຶກສາຂອງຜູ້ໃຫຍ່ ໃນ ສປປ ລາວ

*ຜົນການປະເມີນດ້ານຄວາມຕ້ອງການ*

*ມານະ ຈັນທະນາລານົນ*
ດີວີວີ ອິນເຕີເນເຊິນແນວ, ລາວ

## ຈຸດປະສົງຂອງການວິໄຈ

ສິ່ງໃດທີ່ກະຕຸ້ນໃຫ້ຜູ້ໃຫຍ່ໃນ ສປປ ລາວ ເຂົ້າຮ່ວມໂຄງການການສຶກສານອກໂຮງຮຽນ? ພວກເຂົາເຈົ້າປະເຊີນກັບສິ່ງທ້າທາຍອັນໃດ, ແລະ ໂຄງການເຫຼົ່ານີ້ສາມາດຕອບສະໜອງຄວາມຕ້ອງການຂອງພວກເຂົາໄດ້ດີຂຶ້ນແນວໃດ? ຄຳຖາມທີ່ຊີ້ນຳເຫຼົ່ານີ້ແມ່ນຫົວໃຈຂອງການປະເມີນດ້ານຄວາມຕ້ອງການທີ່ສຳເລັດເມື່ອບໍ່ດົນມານີ້ ນຳໂດຍ ດີວີວີ ອິນເຕີເນເຊິນແນວ, ໂດຍການຮ່ວມມືຢ່າງໃກ້ຊິດກັບກົມການສຶກສານອກໂຮງຮຽນ ແລະ ສູນພັດທະນາການສຶກສານອກໂຮງຮຽນ.

ການວິໄຈນີ້ເປັນສ່ວນໜຶ່ງຂອງວິທີການສ້າງລະບົບການຮຽນຮູ້ ແລະ ການສຶກສາຂອງຜູ້ໃຫຍ່ (ALESBA) ເຊິ່ງເປັນຂອບຫຼາຍຂັ້ນຕອນທີ່ພັດທະນາໂດຍ ດີວີວີ ອິນເຕີເນເຊິນແນວ ເພື່ອສ້າງຄວາມເຂັ້ມແຂງດ້ານຄຸນນະພາບ ແລະ ຄວາມກ່ຽວຂ້ອງຂອງການບໍລິການການຮຽນຮູ້ສຳລັບຜູ້ໃຫຍ່. ໃນເບື້ອງຕົ້ນ ALESBA ໄດ້ຖືກຈັດຕັ້ງປະຕິບັດຢູ່ໃນບັນດາປະເທດຄູ່ຮ່ວມງານໃນອາຟຣິກາ, ໃນປັດຈຸບັນ ALESBA ໄດ້ຖືກທົດລອງຢູ່ໃນ 4 ປະເທດໃນອາຊີ ລວມທັງ ສປປ ລາວ ເພື່ອສ້າງລະບົບການສຶກສານອກໂຮງຮຽນໂດຍມີຈຸດປະສົງໃຫ້ການບໍລິການການສຶກສາສຳລັບຜູ້ໃຫຍ່ທີ່ສາມາດເຂົ້າເຖິງໄດ້, ການປະສານງານທີ່ດີຂຶ້ນ ແລະ ສອດຄ່ອງກັບຄວາມຕ້ອງການຂອງຜູ້ຮຽນຫຼາຍຂຶ້ນ.

## ລວບລວມຂໍ້ມູນໃນທາງເລິກຈາກພາກສະໜາມ

ເພື່ອໃຫ້ໄດ້ຄວາມເຂົ້າໃຈຢ່າງຈະແຈ້ງກ່ຽວກັບຄວາມຕ້ອງການຂອງ ກຸ່ມເປົ້າໝາຍ ການສຶກສານອກໂຮງຮຽນ, ການສຶກສາໄດ້ລວມເອົາການວິເຄາະຂໍ້ມູນມືສອງຂອງຊັບພະຍາກອນທີ່ມີຢູ່ດ້ວຍການມີສ່ວນຮ່ວມໂດຍກົງກັບຜູ້ຮຽນ ແລະ ພາກສ່ວນກ່ຽວຂ້ອງ. ວຽກງານພາກສະໜາມໄດ້ຈັດຂຶ້ນໃນເດືອນເມສາ ປີ 2025 ໃນ ແຂວງບໍລິຄຳໄຊ ແລະ ນະຄອນຫຼວງວຽງຈັນ, ເຊິ່ງ ດີວີວີ ອິນເຕີເນເຊິນແນວ ໄດ້ດຳເນີນການສຳຫຼວດ ແລະ ສົນທະນາກຸ່ມ ຮ່ວມກັບຜູ້ຮຽນໃນລະບົບການສຶກສານອກໂຮງຮຽນ, ຜູ້ໃຫ້ການສຶກສາ ແລະ ຜູ້ຕາງໜ້າໃນຂັ້ນບໍລິຫານ.

ຂໍສະແດງຄວາມຂອບໃຈມາຍັງຄູ່ຮ່ວມພັດທະນາ ກົມການສຶກສານອກໂຮງຮຽນ ແລະ ສູນພັດທະນາການສຶກສານອກໂຮງຮຽນ ແລະ ໜ່ວຍງານໃນຂັ້ນແຂວງ, ຂັ້ນເມືອງ, ລວມທັງການມີສ່ວນຮວມຢ່າງຫ້າວຫັນ ແລະ ເປີດກວ້າງຂອງຜູ້ຕອບແບບສອບຖາມ, ການວິໄຈໄດ້ຖືກປະຕິບັດຢ່າງສຳເລັດຜົນ.

## ຜົນຂອງການປະເມີນທີ່ສຳຄັນ ແລະ ທັດສະນະຂອງນັກຮຽນ

ບົດລາຍງານສະບັບສົມບູນໄດ້ສະເໜີໃຫ້ເຫັນສະພາບລວມ ຂອງການສຶກສານອກໂຮງຮຽນ ທີ່ໄດ້ຮັບການສະໜັບສະໜູນຈາກລັດຖະບານ ໃນປະຈຸບັນ ຢູ່ ສປປ ລາວ. ໂດຍສຶກສາກ່ຽວກັບຜູ້ເຂົ້າຮ່ວມໂຄງການ ວ່າເຂົາເຈົ້າສາມາດເຂົ້າເຖິງໄດ້ງ່າຍ ແລະ ມີຄ່າໃຊ້ຈ່າຍເທົ່າໃດ ແລະ ປັດໄຈໃດທີ່ມີອິດທິພົນຕໍ່ການເຂົ້າຮ່ວມໂຄງການຂອງຜູ້ຮຽນ. ການວິໄຈຍັງໄດ້ໃຫ້ຂໍ້ມູນຄວາມເຂົ້າໃຈກ່ຽວກັບແຮງຈູງໃຈທີ່ຜູ້ຮຽນຕ້ອງການເຂົ້າຮ່ວມໃນໂຄງການການສຶກສານອກໂຮງຮຽນ, ອຸປະສັກທີ່ພວກເຂົາພົບ ແລະ ຄວາມຕ້ອງການສະເພາະໃນການເຂົ້າຮ່ວມ. ສິ່ງສຳຄັນ, ການປະເມີນນີ້ໄດ້ຮວບຮວມທັດສະນະ/ມຸມມອງຂອງຜູ້ຮຽນກ່ຽວກັບຄຸນນະພາບ ແລະ ຄວາມກ່ຽວຂ້ອງຂອງບັນດາໂຄງການທີ່ມີຢູ່ ແລະ ເນັ້ນໃສ່ພື້ນທີ່ທີ່ຕ້ອງການ ການປັບປຸງຫຼາຍທີ່ສຸດ.

## ກ້າວໄປຂ້າງໜ້າກັບ ALESBA

ຜົນການປະເມີນດ້ານຄວາມຕ້ອງການແມ່ນເປັນຕົວແທນຂອງບາດກ້າວທີ່ສຳຄັນໃນຂອບແຜນງານຂອງ ALESBA. ພ້ອມກັບຜົນຂອງ ການປະເມີນດ້ານການສະໜອງຂອງການສຶກສານອກໂຮງຮຽນທີ່ດຳເນີນຜ່ານມາ, ແມ່ນໄດ້ຖືກທົບທວນຮ່ວມກັນໃນກອງປະຊຸມແຫ່ງຊາດ ກັບພາກສ່ວນກ່ຽວຂ້ອງຂອງລັດຖະບານ ແລະ ຄູ່ຮ່ວມພັດທະນາ. ໃນລະຫວ່າງ ກອງປະຊຸມປຶກສາຫາລື ໄດ້ມີການພັດທະນາ ລະບົບຕ່ອງໂສ້ອຸປະທານ ແລະ ແຜນວາດສາເຫດ ແລະ ຜົນກະທົບຂອງສິ່ງທ້າທາຍໃນປະຈຸບັນໄດ້ຖືກພັດທະນາຮ່ວມກັນ. ອີງຕາມຜົນໄດ້ຮັບເຫຼົ່ານີ້, ຂັ້ນຕອນຕໍ່ໄປຈະເປັນການອອກແບບ ແລະ ປຶກສາຫາລື ລະບົບການສຶກສານອກໂຮງຮຽນ ທາງເລືອກ ເພື່ອຮັບມືກັບສິ່ງທ້າທາຍທີ່ພົບພໍ້ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການສຶກສານອກໂຮງຮຽນໃນພາບລວມ ຢູ່ໃນ ສປປ ລາວ.



ລົງເກັບກຳຂໍ້ມູນຢູ່ໃນແຂວງບໍລິຄຳໄຊ



# ສູນການຮຽນຮູ້ຊຸມຊົນຕົວແບບໃນລາວ

## *ສ້າງຄວາມເຂັ້ມແຂງໃຫ້ຊຸມຊົນຜ່ານການຮຽນຮູ້ຕະຫຼອດຊີວິດ ແລະ ນະວັດຕະກຳຂອງທ້ອງຖິ່ນ*

*ເຫຼັກໄຫຼ ສຸດທະວີໄລ*
ດີວີວີ ອິນເຕີເນເຊິນແນວ, ລາວ

ຢູ່ທີ່ເມືອງປາກຊັນ, ຫ່າງຈາກນະຄອນຫຼວງວຽງຈັນໄປທາງທິດຕາເວັນອອກປະມານ 150 ກິໂລແມັດ, ສູນການຮຽນຮູ້ຊຸມຊົນບົວວຽງຄຳ (ສຮຊ) ໄດ້ກາຍມາເປັນສູນກາງການຮຽນຮູ້ຕະຫຼອດຊີວິດ ແລະ ການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ. ສູນດັ່ງກ່າວດຳເນີນແຜນງານຕ່າງໆ ສອດຄ່ອງກັບຄວາມຕ້ອງການການຮຽນຮູ້ທີ່ແທ້ຈິງຂອງຊຸມຊົນທ້ອງຖິ່ນ, ໂດຍເນັ້ນໜັກວິທີການມີສ່ວນຮ່ວມ ທີ່ດຶງດູດຄວາມຕ້ອງການຂອງສະມາຊິກໃນຊຸມຊົນເຂົ້າມາມີສ່ວນຮ່ວມຢ່າງຫ້າວຫັນ. ນອກຈາກນັ້ນ, ສຮຊ ຍັງສົ່ງເສີມສະຫວັດດີການຂອງຊຸມຊົນແບບລວມສູນໂດຍຜ່ານກິດຈະກຳທີ່ດຶງດູດ ແລະ ສ້າງຜົນກະທົບດ້ານບວກ. ກິດຈະກຳເຫຼົ່ານີ້ ລວມທັງກິດຈະກຳປູກຈິດສຳນຶກດ້ານສິ່ງແວດລ້ອມ, ການສະເຫຼີມສະຫຼອງວັນເດັກສາກົນ ແລະ ໂຄງການລິເລີ່ມປ້ອງກັນຢາເສບຕິດໂດຍສະເພາະສຳລັບໄວໜຸ່ມ.

### ສ້າງຄວາມເຂັ້ມແຂງໂດຍຜ່ານການສຶກສາ ແລະ ທັກສະການປະຕິບັດຕົວຈິງ

ສຮຊ ບົວແວງຄຳ ເປັນສູນຕົວແບບໃນການປັບຫຼັກສູດໃຫ້ສອດຄ່ອງເໝາະສົມກັບຊີວິດການເປັນຢູ່ ແລະ ໂອກາດທາງເສດຖະກິດຂອງທ້ອງຖິ່ນ. ສູນໄດ້ສະໜອງຫຼັກສູດການຝຶກອົບຮົມວິຊາຊີບທີ່ມີຄຸນນະພາບສູງ ຫຼາກຫຼາຍຫຼັກສູດ ແລະ ບໍ່ເສຍຄ່າໃຊ້ຈ່າຍ, ເຊິ່ງອອກແບບມາເພື່ອສ້າງທັກສະໃນການປະຕິບັດຕົວຈິງ ແລະ ສາມາດສ້າງລາຍຮັບໃຫ້ແກ່ຜູ້ຮຽນ. ຫຼັກສູດເຫຼົ່ານີ້ລວມມີການລ້ຽງກົບ, ການປູກຜັກ, ການຫຍິບເຄື່ອງ, ການຕໍ່າຫູກ, ການປຸງແຕ່ງອາຫານ, ແລະ ການປູກເຫັດ.

### ການປູກເຫັດແບບເພິ່ງພາຕົນເອງ: ຕົ້ນແບບສຳລັບທຸລະກິດທ້ອງຖິ່ນ

ເພື່ອສະແດງໃຫ້ເຫັນເຖິງຄວາມມຸ່ງໝັ້ນອັນໜັກແໜ້ນຕໍ່ກັບຄວາມຍືນຍົງ, ສູນບົວວຽງຄຳ ໄດ້ຮັບຮອງເອົາຂໍ້ລິເລີ່ມ “ໜຶ່ງ ສຮຊ, ໜຶ່ງ ຜະລິດຕະພັນ” ມາໃຊ້ຢ່າງເຕັມທີ່, ເຊິ່ງເປັນການໂຄສະນາທີ່ຖືກອອກແບບມາເພື່ອຊຸກຍູ້ທຸລະກິດໃນທ້ອງຖິ່ນ ແລະ ສົ່ງເສີມການເພິ່ງພາຕົນເອງໃນໄລຍະຍາວ, ໂດຍໄດ້ຮັບການສະໜັບສະໜູນຈາກປະຊາຊົນ ເພື່ອເລີ່ມຕົ້ນການເປັນຜູ້ປະກອບການໃນຊຸມຊົນ.

ວິໄສທັດນີ້ໄດ້ກາຍເປັນຈິງໂດຍຜ່ານກິດຈະກຳການປູກເຫັດທີ່ບຸກເບີກໂດຍສູນ, ເຊິ່ງໄດ້ກາຍເປັນຕົວຢ່າງທີ່ດີເດັ່ນຂອງຄວາມສໍາເລັດທີ່ຂັບເຄື່ອນໂດຍຊຸມຊົນ. ນັບຕັ້ງແຕ່ການເລີ່ມດຳເນີນໂຄງການໃນເດືອນມີນາ ປີ 2025. ໂຄງການດັ່ງກ່າວໄດ້ເກັບກ່ຽວກ່ຽວເຫັດໄດ້ຫຼາຍກວ່າ 50 ກິໂລກຣາມ, ສ້າງທັງລາຍຮັບ ແລະ ມີທ່າແຮງໃນການຂະຫຍາຍຕົວຕໍ່ໄປ.

ຫົວໃຈສຳຄັນ ຂອງໂຄງການລິເລີ່ມນີ້ແມ່ນສະມາຊິກຊຸມຊົນສາມທ່ານທີ່ເສຍສະຫຼະຕົນ, ເຊິ່ງແຕ່ລະທ່ານສະຫຼະທຶນຮອນຂອງຕົນເອງ ເພື່ອຮ່ວມກັນລົງທຶນ. ຄວາມມຸ່ງໝັ້ນຂອງເຂົາເຈົ້າສະທ້ອນໃຫ້ເຫັນເຖິງຄວາມເປັນເຈົ້າການທີ່ເຂັ້ມແຂງໃນທ້ອງຖິ່ນ ແລະ ຄວາມຮັບຜິດຊອບຮ່ວມກັນເພື່ອຄວາມສຳເລັດຂອງໂຄງການ. ຮ່າງຂໍ້ຕົກລົງທາງການເພື່ອຮັບປະກັນວ່າສ່ວນໜຶ່ງຂອງຜົນກຳໄລຈະໄດ້ຖືກລົງທຶນຄືນໃໝ່ ເຂົ້າໃນງົບປະມານການດຳເນີນງານຂອງ ສຮຊ, ເຊິ່ງຈະຊ່ວຍປະກອບສ່ວນເພື່ອສົ່ງເສີມໃຫ້ເກີດຄວາມຍືນຍົງໃນໄລຍະຍາວ.

ໃນອະນາຄົດ, ໂຄງການມີເປົ້າໝາຍຜະລິດເຊື້ອເຫັດຢູ່ໃນທ້ອງຖິ່ນ, ເພື່ອຫຼຸດຜ່ອນການເພິ່ງພາອາໄສຜູ້ສະໜອງຈາກພາຍນອກ ແລະ ສົ່ງເສີມການເພິ່ງພາຕົນເອງຂອງທ້ອງຖິ່ນ. ໄລຍະຕໍ່ໄປຂອງໂຄງການລິເລີ່ມ ແມ່ນການກໍ່ສ້າງອາຄານເພີ່ມເຕີມ ແລະ ສ້າງບໍ່ນ້ຳບາດານ ເພື່ອສະໜອງການເຂົ້າເຖິງແຫຼ່ງນ້ຳທີ່ປອດໄພ ເພື່ອເພີ່ມຜົນຜະລິດ ແລະ ການເຂົ້າເຖິງຊຸມຊົນ. ການພັດທະນາເຫຼົ່ານີ້ຈະເສີມຂະຫຍາຍບົດບາດຂອງ ສຮຊ ໃນຖານະເປັນຕົວກະຕຸ້ນເພື່ອສ້າງນະວັດຕະກຳໃນເຂດຊົນນະບົດ ແລະ ທຸລະກິດໃນທ້ອງຖິ່ນແບບຍືນຍົງ.

### ສ້າງຄວາມອາດສາມາດ ແລະ ຄວາມໝັ້ນໃຈຜ່ານການສະໜັບສະໜູນ

ຄວາມກ້າວໜ້າຂອງ ສຮຊ ໄດ້ຮັບການສະໜັບສະໜູນຢ່າງມີຄວາມໝາຍສຳຄັນ ໂດຍການມີ „ຜູ້ຊຸກຍູ້“ ທີ່ມີຄວາມຕັ້ງໃຈໃນຂັ້ນເມືອງ ຫຼື ແຂວງ, ເຊິ່ງການສົ່ງເສີມໄດ້ມີບົດບາດສຳຄັນໃນການຮັບປະກັນການຈັດຫາແຫຼ່ງທຶນທີ່ຈຳເປັນ ແລະ ຍົກສູງຄວາມໝັ້ນໃຈຂອງທີມງານ ສຮຊ. ການສະໜັບສະໜູນດ້ານຍຸດທະສາດນີ້ໄດ້ຊ່ວຍໃຫ້ພະນັກງານໃນສູນ ສາມາດລິເລີ່ມໂຄງການໃໝ່ ແລະ ສ້າງໂຄງສ້າງທີ່ຮັບປະກັນໃຫ້ເກີດຜົນສຳເລັດຢ່າງຕໍ່ເນື່ອງ.

ໂດຍໄດ້ຮັບການແນະນຳ ແລະ ສະໜັບສະໜູນດ້ານວິຊາການ ຂອງ ດີວີວີ ອິນເຕີເນເຊິນແນວ, ສູນແຫ່ງນີ້ຈຶ່ງສາມາດປູກຝັງຄວາມສາມາດພາຍໃນທີ່ເຂັ້ມແຂງ ໃນການອອກແບບ, ດຳເນີນການ ແລະ ຮັກສາແຜນງານການຮຽນຮູ້ທີ່ມີຜົນກະທົບສູງທີ່ຕອບສະໜອງຄວາມຕ້ອງການຂອງຊຸມຊົນຢ່າງແທ້ຈິງ.

### ຂັບເຄື່ອນການປ່ຽນແປງທີ່ຍືນຍົງໃນຊຸມຊົນ

ຄວາມພະຍາຍາມທີ່ບໍ່ຮູ້ບໍ່ອິດເມື່ອຍ ແລະ ເປັນແບບຢ່າງຂອງ ສູນບົວແວງຄຳ ກຳລັງສ້າງໃຫ້ເກີດການປ່ຽນແປງໃນທາງບວກທີ່ເປັນຮູບປະທຳ. ຊຸມຊົນໄດ້ມີສ່ວນຮ່ວມເພີ່ມຂຶ້ນຢ່າງມີຄວາມໝາຍສຳຄັນ, ໂດຍສະເພາະໃນຂົງເຂດການປົກປັກຮັກສາສິ່ງແວດລ້ອມ ແລະ ຄວາມຮັບຮູ້ກ່ຽວກັບສິດທິຂອງເດັກນ້ອຍ. ຜົນໄດ້ຮັບເຫຼົ່ານີ້ບໍ່ພຽງແຕ່ສະທ້ອນໃຫ້ເຫັນ ເຖິງຄວາມທຸ່ມເທຂອງທີມງານ ສຮຊ ແຕ່ຍັງສະທ້ອນໃຫ້ເຫັນທ່າແຮງໃນການຫັນປ່ຽນຂອງການສຶກສາແບບລວມສູນ ທີ່ນຳພາໂດຍຊຸມຊົນ.

ໂດຍຜ່ານບັນດາໂຄງການນະວັດຕະກຳ ແລະ ວິທີແບບມີສ່ວນຮ່ວມ, ສູນການຮຽນຮູ້ຊຸມຊົນບົວວຽງຄຳ ໄດ້ກາຍເປັນກຳລັງຂັບເຄື່ອນສຳຄັນ ເພື່ອກາວສູ່ຄວາມຈະເລີນຮຸ່ງເຮືອງຂອງບຸກຄົນ ແລະ ຄວາມກ້າວໜ້າຮ່ວມກັນ. ວຽກງານຂອງສູນແມ່ນສອດຄ່ອງກັບ ຍຸດທະສາດແຫ່ງຊາດເພື່ອການຮຽນຮູ້ຕະຫຼອດຊີວິດ ແລະ ການພັດທະນາແບບຍືນຍົງ, ເພື່ອໄດ້ເປັນຫົນທາງສູ່ອະນາຄົດທີ່ສະເໝີພາບ ແລະ ສ້າງຄວາມເຂັ້ມແຂງສຳລັບທຸກຄົນ.



ເບົ້າເຫັດທີ່ກະກຽມສຳລັບປູກ ໃນ ສຮຊ

# ຜູ້ນຳໄວໜຸ່ມທີ່ກາານຂັບເຄື່ອນກິດຈະກຳ ໃນສູນການຮຽນຮູ້ຊຸມຊົນ



ດອກຄຳ ຊົມສີຫາປັນຍາ
ດີວີວີ ອິນເຕີເນຊັນແນວ, ລາວ

## ຜູ້ນຳໄວໜຸ່ມເປັນຜູ້ຂັບເຄື່ອນການຮຽນຮູ້ຂອງຊຸມຊົນ

ໄວໜຸ່ມຖືໄດ້ວ່າເປັນປະຊາກອນສ່ວນຫຼາຍຂອງປະເທດ ທັງເປັນກຳລັງແຮງໃນການປ່ຽນແປງໃນຊຸມຊົນ, ໃນປະຈຸບັນໂຄງການ ດີວີວີ ອິນເຕີເນຊັນແນວ ກຳລັງຈັດຕັ້ງປະຕິບັດໂຄງການພາຍໃຕ້ທຶນຂອງມູນລະນິທິ (Sternsinger) ໃນສູນການຮຽນຮູ້ຊຸມຊົນຕົວແບບ ເພື່ອສ້າງໃຫ້ສູນການຮຽນຮູ້ຊຸມຊົນກາຍເປັນບ່ອນສຳລັບການພົບປະ, ແລກປ່ຽນ ແລະ ຮຽນຮູ້ ຂອງຊຸມຊົນ. ໂຄງການສົ່ງເສີມກິດຈະກຳການຮຽນຮູ້ສຳລັບໄວໜຸ່ມ ແລະ ເດັກນ້ອຍໃນສູນການຮຽນຮູ້ຊຸມຊົນຕົວແບບ ແມ່ນເຮັດວຽກໂດຍກົງກັບກັບໄວໜຸ່ມ ແລະ ເດັກນ້ອຍໃນຊຸມຊົນໃນການຈັດຕັ້ງປະຕິບັດກິດຈະກຳໃນສູນການຮຽນຮູ້ຊຸມຊົນ, ເຊິ່ງເປັນໂຄງການຮ່ວມມືກັນລະຫວ່າງດີວີວີ ແລະ ກົມການສຶກສານອກໂຮງຮຽນ ພາຍໃຕ້ການຊີ້ນຳຂອງກະຊວງສຶກສາທິການ ແລະ ກິລາ. Sternsinger ແມ່ນມູນນິທິຊ່ວຍເຫຼືອເດັກຂອງປະເທດເຢຍລະມັນ.

## ໄວໜຸ່ມຂັບເຄື່ອນຊຸມຊົນ

ໃນການເຮັດວຽກໂດຍສະເພາະ ແມ່ນໃນອົງການຈັດຕັ້ງແຕ່ລະຂັ້ນໃນ ສປປ ລາວ ລ້ວນແຕ່ມີສະມາຊິກໄວໜຸ່ມ ເປັນຜູ້ຂັບເຄື່ອນ ແລະ ນຳພາບັນດາຂະບວນການກິດຈະກຳຕ່າງໆ ໃນຊຸມຊົນ. ໄວໜຸ່ມເປັນກຳລັງແຮງໃນການການລະດົມຜູ້ເຂົ້າຮ່ວມ, ຕູ້ມໂຮມປະຊາຊົນໃນຊຸມຊົນ ແລະ ເຂດໃກ້ຄຽງ ທັງເປັນກະບອກສຽງເປັນກະບອກສຽງຂອງຊຸມຊົນ. ໄວໜຸ່ມໃນຊຸມຊົນແມ່ນຮູ້ຈັກພື້ນຖານຂອງຊຸມຊົນເຂົາເຈົ້າເປັນຢ່າງດີ ສະນັ້ນໂຄງການຈຶ່ງໄດ້ມີກິດຈະກຳຜູ້ນຳໄວໜຸ່ມ ເຊິ່ງຜູ້ນຳໄວໜຸ່ມເຫຼົ່ານີ້ແມ່ນຜູ້ນຳພາດຳເນີນກິດຈະກຳ ໃນຊຸມຊົນຮ່ວມກັບພະນັກງານ ໃນສູນການຮຽນຮູ້ຊຸມຊົນ.

ຜູ້ນຳໄວໜຸ່ມໃນຊຸມຊົນແມ່ນຖືກຄັດເລືອກ ໂດຍຜ່ານກອງປະຊຸມໃນຂັ້ນຊຸມຊົນໃນຂັ້ນບ້ານ ອີງຕາມເງື່ອນໄຂການຄັດເລືອກ ແລະ ຄວາມສະໝັກໃຈ. ຜູ້ນຳໄວໜຸ່ມນັກຮຽນໃນໂຮງຮຽນແມ່ນການເປັນອາສາສະໝັກໂດຍການສະເໜີຊື່ໃຫ້ແກ່ຄູປະຈຳໃນໂຮງຮຽນ ແລະ ຖືກຄັດເລືອກໃນຂັ້ນໂຮງຮຽນເພີ່ມເຕີມ ໂດຍເຫັນວ່ານັກຮຽນມີສ່ວນຮ່ວມໃນກິດຈະກຳຂອງໂຮງຮຽນ ລວມທັງມີຄວາມກະຕືລືລົ້ນໃນການຊ່ວຍເຫຼືອຄົນອື່ນໆ.

## ການສ້າງຄວາມອາດສາມາດໃຫ້ແກ່ໄວໜຸ່ມ

ຜູ້ນຳໄວໜຸ່ມເຫຼົ່ານີ້ແມ່ນໄດ້ຮັບການຝຶກອົບຮົມ ໂດຍທີມງານຄູຝຶກຊ່ຽວຊານສະເພາະເຮັດວຽກກັບໄວໜຸ່ມ, ການພັດທະນາຂີດຄວາມສາມາດ ແລະ ຝຶກທັກສະຜ່ານກິດຈະກຳທີ່ຫຼາກຫຼາຍ ໂດຍກິດຈະກຳຝຶກອົບຮົມແມ່ນໄດ້ອອກແບບເນັ້ນໜັກ ສະເພາະໄວໜຸ່ມເພື່ອສ້າງຄວາມເຂັ້ມແຂງໃຫ້ເຂົາເຈົ້າທາງດ້ານອາລົມ, ຄວາມຄິດ ແລະ ຄວາມສຳພັນ ໂດຍຜ່ານການຮຽນຮູ້ ແລະ ເນັ້ນການລົງມືເຮັດ ແລະ ມີສ່ວນຮ່ວມ. ຜູ້ນຳໄວໜຸ່ມເປັນຕົວຂັບເຄື່ອນ ແລະ ມີສ່ວນຮ່ວມໃນການປູກຈິດສຳນຶກໃຫ້ຊຸມຊົນພ້ອມກັນແກ້ໄຂບັນຫາ ຮ່ວມກັບຊຸມຊົນເພື່ອອະນາຄົດຂອງເດັກ, ໄວໜຸ່ມ ແລະ ຊຸມຊົນຕໍ່ໄປ.

ການຈັດຕັ້ງປະຕິບັດກິດຈະກຳ ໂດຍສະເພາະການຝຶກອົບຮົມແມ່ນດຳເນີນການຮ່ວມກັບທີມງານຂອງແຕ່ລະສູນຮຽນຮູ້ຊຸມຊົນ, ການຝຶກອົບຮົມແມ່ນໄດ້ກວມເອົາຫຼາຍຫົວຂໍ້ທີ່ແຕກຕ່າງ ໂດຍອີງຕາມຄວາມຕ້ອງການຂອງຊຸມຊົນ ແລະ ປຶ້ມຄູ່ມືຝຶກອົບຮົມ ເຊັ່ນ: ການຮັກສາສິ່ງແວດລ້ອມ, ການປ້ອງກັນສິ່ງເສບຕິດ, ທັກສະສັງຄົມ, ການບໍລິຫານເງິນ ແລະ ສິດທິເດັກ.

ນອກຈາກການຝຶກອົບຮົມທັກສະຮອບໂຕແລ້ວ ໄວໜຸ່ມຍັງໄດ້ສະທ້ອນບັນຫາທີ່ໄວໜຸ່ມໃນຊຸມຊົນດ້ວຍກັນເອງຕ້ອງຜະເຊີນເຊັ່ນ: ບັນຫາສິ່ງເສບຕິດ, ການຖືພາໃນໄວຮຽນ, ການຂາດໂອກາດທາງການສຶກສາ. ນອກນັ້ນ, ຜູ້ນຳໄວໜຸ່ມຍັງໄດ້ຮ່ວມເປັນຜູ້ດຳເນີນການໃນການການຈັດເວທີສົນທະນາແລກປ່ຽນໃນສູນການຮຽນຮູ້ຊຸມຊົນ ແລະ ໃນໂຮງຮຽນຂອງເຂົາເຈົ້າ.

## ຜູ້ນຳເພື່ອການປ່ຽນແປງ

ການສົ່ງເສີມກິດຈະກຳທັກສະຄວາມເປັນຜູ້ນຳໃຫ້ໄວໜຸ່ມ ເປັນຮາກຖານສຳຄັນທີ່ຊ່ວຍໃຫ້ພວກເຂົາເຈົ້າໄດ້ເຕີບໂຕເປັນຜູ້ໃຫຍ່ທີ່ສາມາດຈັດການຊີວິດໄດ້ຢ່າງມີປະສິດທິພາບ. ການສ້າງພື້ນທີ່ທາງບວກ ແລະ ການສະໜັບສະໜູນໃຫ້ໄວໜຸ່ມໄດ້ມີບົດບາດໃນການແກ້ໄຂບັນຫາຊຸມຊົນ ເປັນກຸນແຈສຳຄັນໃນການສ້າງຄວາມເຂັ້ມແຂງຈາກພາຍໃນ ແລະ ຊຸກຍູ້ການປ່ຽນແປງໃນຊຸມຊົນຢ່າງຍືນຍົງ. ການເປັນຜູ້ນຳໄວໜຸ່ມທີ່ເຂັ້ມແຂງທາງດ້ານຈິດໃຈ, ຄວາມຄິດ ແລະ ຈິດສຳນຶກເພື່ອທີ່ຈະປ່ຽນແປງໃນທາງບວກ, ຜູ້ນຳໄວໜຸ່ມໄດ້ປະກອບເປັນສ່ວນສຳຄັນໃຫ້ແກ່ຊຸມຊົນຂອງເຂົາເຈົ້າ. ສຽງຂອງຜູ້ນຳໄວໜຸ່ມແມ່ນສ່ວນໜຶ່ງຂອງການປ່ຽນແປງ ໄວໜຸ່ມຕ້ອງການໂອກາດ ແລະ ຕ້ອງການພື້ນທີ່ ທີ່ເປີດໂອກາດໃຫ້ເຂົາເຈົ້າໄດ້ລົງມືປະຕິບັດ, ກ້າຄິດ, ກ້າເວົ້າ ແລະ ກ້າສ້າງສັນສິ່ງໃໝ່ເພື່ອຊຸມຊົນຂອງເຂົາເຈົ້າເອງ.



ຜູ້ນຳຊາວໜຸ່ມໃນລະຫວ່າງການສົນທະນາເປີດກວ້າງໃນ ສຮຊ



*Bin Savoeurn*
NTFP, ກຳປູເຈຍ

# ສູນການຮຽນຮູ້ຕະຫຼອດຊີວິດກົກລັກ

## ສູນການຮຽນຮູ້ຊຸມຊົນ: ສະຖານທີ່ຮຽນຮູ້ທີ່ມີທາແຮງຂອງຊຸມຊົນຊົນເຜົ່າພື້ນເມືອງ ກະເວັດ, ແຂວງຣັດຕະນະຄີຣີ

ທັດສະນີຍະພາບທີ່ຂຽວສົດງົດງາມຂອງແຂວງ ຣັດຕະນະຄີຣີ (Ratanakiri), ສູນການຮຽນຮູ້ຊຸມຊົນກົກລັກ (Kok Lak) ປຽບດັ່ງແສງແຫ່ງຄວາມຫວັງອັນສົດໃສ ຂອງຊຸມຊົນພື້ນເມືອງເຜົ່າກະເວັດ (Kavet). ສູນແຫ່ງນີ້ຕັ້ງຢູ່ໃຈກາງຂອງບ້ານຣອກ (Rok) ແລະ ໄດ້ກາຍເປັນພະລັງແຫ່ງການປ່ຽນແປງໃໝ່, ເປີດປະຕູໃຫ້ແກ່ການສຶກສາ, ສ້າງຄວາມເຂັ້ມແຂງ, ພັດທະນາຊຸມຊົນ.

## ເສັ້ນທາງສູ່ການຫັນປ່ຽນ

ເມື່ອກ່າວເຖິງສູນຝຶກອົບຮົມກົກຫຼັກ, ຄັ້ງໜຶ່ງສູນແຫ່ງນີ້ເຄີຍ ຖືກເອີ້ນວ່າ "ສູນຝຶກອົບຮົມຊຸມຊົນກົກລັກ", ສູນຝຶກອົບຮົມຄູອາສາສະໝັກແຫ່ງນີ້ ແມ່ນເກີດມາຈາກວິໄສທັດຂອງສະມາຊິກຊຸມຊົນທີ່ອຸທິດຕົນ ແລະ ການສະໜັບສະໜູນອັນເອື້ອເຟື້ອເພື່ອແຜ່ຂອງ ດີວີວີ ອິນເຕີເນເຊິນແນວ ແລະ ຄູ່ຮ່ວມພັດທະນາອື່ນໆ. ເມື່ອເວລາຜ່ານໄປ, ສູນດັ່ງກ່າວໄດ້ພັດທະນາເປັນ "ສູນການຮຽນຮູ້ຕະຫຼອດຊີວິດ" (LLC), ໄດ້ຮັບການຮັບຮອງຈາກກະຊວງສຶກສາທິການ, ເຍົາວະຊົນ ແລະ ກິລາ ຢ່າງເປັນທາງການໃນວັນທີ 30 ເມສາ 2025. ການຫັນປ່ຽນຄັ້ງສຳຄັນນີ້ ບໍ່ພຽງແຕ່ເປັນການປ່ຽນຊື່ເທົ່ານັ້ນ; ແຕ່ສະທ້ອນໃຫ້ເຫັນເຖິງຄວາມອົດທົນ ແລະ ຄວາມຕັ້ງໃຈຂອງປະຊາຊົນເຜົ່າກະເວັດ ທີ່ສະແດງໃຫ້ເຫັນເຖິງສິ່ງທີ່ສາມາດບັນລຸໄດ້ໃນເວລາທີ່ຊຸມຊົນມີຄວາມສາມັກຄີເພື່ອຈຸດປະສົງອັນດຽວກັນ.

## ການເອົາຊະນະສິ່ງທ້າທາຍ

ປະຊາຊົນເຜົ່າກະເວັດ ເປັນໜຶ່ງໃນບັນດາຊົນເຜົ່າພື້ນເມືອງຂອງກຳປູເຈຍ ຕ້ອງປະເຊີນໜ້າກັບສິ່ງທ້າທາຍອັນໃຫຍ່ຫຼວງ ດ້ວຍທີ່ຕັ້ງພູມສັນຖານຢູ່ຫ່າງໄກສອກຫຼີກໃກ້ກັບອຸທະຍານແຫ່ງຊາດ Virachey. ເດັກນ້ອຍເຜົ່າກະເວັດຈຳນວນຫຼາຍໄດ້ຖືກປະຕິເສດໂອກາດທາງດ້ານການສຶກສາ, ເຊິ່ງຈະຕ້ອງໄດ້ໄປເຮັດວຽກໃນສວນແທນທີ່ຈະເຂົ້າໂຮງຮຽນ. ໃນປະຫວັດສາດ, ຊຸມຊົນແຫ່ງນີ້ພົບບັນຫາດ້ານການຮູ້ໜັງສື, ບໍ່ມີພາສາຂຽນ, ຈົນມາຮອດປີ 2002 ຈຶ່ງໄດ້ມີການພັດທະນາສື່ການຮຽນຮູ້. ເຖິງແມ່ນວ່າຫ້ອງຮຽນການຮູ້ໜັງສືໄດ້ເລີ່ມຕົ້ນໃນປີ 2008, ແຕ່ໃນຫຼາຍໆຄັ້ງ ຊັ້ນຮຽນແມ່ນຖືກຈັດຢູ່ໃນເງື່ອນໄຂສະພາບແວດລ້ອມທີ່ທ້າທາຍ ເຮັດໃຫ້ການຮຽນຮູ້ເປັນພາລະກິດທີ່ທ້າທາຍ.



ການສົນທະນາ ແລກປ່ຽນ ໃນສູນການຮຽນຮູ້ຕະຫຼອດຊີວິດກົກລັກ

## ແຮງຊຸກຍູ້ເພື່ອການປ່ຽນແປງ

ໂດຍການຮັບຮູ້ຄວາມຈຳເປັນອັນຮີບດ່ວນສຳລັບການສຶກສາທີ່ສາມາດເຂົ້າເຖິງໄດ້, ຊຸມຊົນຈຶ່ງໄດ້ສະໜັບສະໜູນຢ່າງກະຕືລືລົ້ນໃຫ້ມີສູນຝຶກອົບຮົມສະເພາະ ໃນປີ 1998 ຫາປີ 2012, ຄູສອນໄດ້ພົບກັບອຸປະສັກໃນການເດີນທາງໄປເຂົ້າຮ່ວມຝຶກອົບຮົມທີ່ບ້ານເຊົ່າໃນ ເມືອງເວີນໄຊ (Veunsai). ໃນປີ 2018 ວິໄສທັດປະກົດຂຶ້ນເມື່ອມີຜູ້ນຳຊຸມຊົນສະເໜີທີ່ດິນຢູ່ໃກ້ກັບນ້ຳຕົກຕາດໂອລາ ໄລ (Ola Lai) ເຊິ່ງນຳໄປສູ່ການສ້າງສູນຝຶກອົບຮົມຊຸມຊົນກົກລັກໃນປີ 2019. ໂຄງການນີ້ໄດ້ຮັບການສະໜັບສະໜູນຈາກ ດີວີວີ ອິນເຕີເນເຊິນແນວ ແລະ ຄູ່ຮ່ວມພັດທະນາອື່ນໆ, ສະແດງໃຫ້ເຫັນເຖິງຄວາມມຸ່ງໝັ້ນອັນບໍ່ຫວັ່ນໄຫວຂອງຊຸມຊົນກະເວັດ ໂດຍສະມາຊິກຊຸມຊົນໄດ້ປະກອບສ່ວນວັດຖຸອຸປະກອນ ແລະ ແຮງງານເພື່ອເຮັດໃຫ້ຄວາມຝັນຂອງເຂົາເຈົ້າເປັນຄວາມຈິງ.

## ພື້ນທີ່ສະເພາະສຳລັບການຮຽນຮູ້

ສູນການຮຽນຮູ້ຊຸມຊົນ ກົກລັກ ໄດ້ຖືກອອກແບບໃຫ້ເປັນຫຼາຍກວ່າອາຄານສະຖານທີ່; ມັນໄດ້ຖືກຄາດຄະເນວ່າເປັນພື້ນທີ່ສະເພາະສຳລັບການຮຽນຮູ້ ແລະ ການພັດທະນາທັກສະ. ຈຸດປະສົງຕົ້ນຕໍປະກອບມີ:

- ການຝຶກອົບຮົມຄູອາສາສະໝັກ: ສະໜອງຄູສອນໃຫ້ມີທັກສະການສິດສອນທີ່ມີປະສິດທິພາບທັງພາສາຂະເໝນ ແລະ ກະເວັດ.
- ພັດທະນາທັກສະ: ສະໜອງຫຼັກສູດຂະແໜງກະສິກຳ, ສຸຂະສຶກສາ ແລະ ທັກສະພາສາອັງກິດ ແລະ ຄອມພິວເຕີ ທີ່ປັບໃຫ້ເໝາະສົມກັບຄວາມຕ້ອງການຂອງຊຸມຊົນ.
- ກອງປະຊຸມຊຸມຊົນ: ເປັນສະຖານທີ່ສຳລັບການສົນທະນາແລກປ່ຽນຄວາມຄິດເຫັນລະຫວ່າງຕົວແທນຊຸມຊົນ, ອົງການຈັດຕັ້ງຄູ່ຮ່ວມພັດທະນາ ແລະ ອຳນາດການປົກຄອງທ້ອງຖິ່ນ.
- ສູນການອ່ານ: ສ້າງພື້ນທີ່ຕ້ອນຮັບໃຫ້ເດັກນ້ອຍ ແລະ ໄວໜຸ່ມໄດ້ເພື່ອຄົ້ນຫາປຶ້ມທີ່ຫຼາກຫຼາຍປະເພດ.

## ສະຖານທີ່ຕັ້ງຊຸມຊົນເປັນໃຈກາງ

ສູນການຮຽນຮູ້ຊຸມຊົນກົກລັກ ຕັ້ງຢູ່ບໍລິເວນນ້ຳຕົກຕາດທີ່ງົດງາມ ຫ່າງຈາກເທດສະບານເມືອງເວີນໄຊ 15 ກິໂລແມັດ ແລະ ຫ່າງຈາກເທດສະບານແຂວງຣັດຕະນະຄີຣີ 52 ກິໂລແມັດ. ໃຫ້ບໍລິການປະຊາຊົນທັງໝົດ 2.874 ຄົນ ທີ່ຢູ່ໃນ 4 ບ້ານ, ໃນນັ້ນລວມທັງຊົນເຜົ່າກະເວັດ 1.447 ຄົນ. ການກໍ່ສ້າງສູນດັ່ງກ່າວ ແມ່ນການມີສ່ວນຮ່ວມຂອງຊຸມຊົນເປັນສຳຄັນ ເພື່ອສົ່ງເສີມຄວາມເປັນເຈົ້າການ ແລະ ຄວາມພາກພູມໃຈຂອງຊຸມຊົນທ້ອງຖິ່ນ.

## ສະພາບປະຈຸບັນ ແລະ ແຜນງານ

ປະຈຸບັນ, ສູນການຮຽນຮູ້ຕະຫຼອດຊີວິດ ກົກລັກ ສະໜອງບັນດາແຜນງານການຮຽນຮູ້ທີ່ສໍາຄັນ, ລວມມີ:

1. ການຝຶກອົບຮົມການຮູ້ໜັງສື: ຈັດຝຶກອົບຮົມປະຈໍາໄຕມາດສໍາລັບຄູກ່ຽວກັບວິທີການສອນ ພາສາກະເວັດ ແລະ ຂະເໝນ.
2. ການຝຶກອົບຮົມທັກສະຊີວິດ: ຈັດໂຄງການດ້ານກະສິກໍາ, ສຸຂະອະນາໄມ ແລະ ສຸຂະສຶກສາ ທີ່ສອດຄ່ອງກັບຄວາມຕ້ອງການຂອງຊຸມຊົນ.
3. ຫ້ອງຮຽນພາສາອັງກິດ ແລະ ຄອມພິວເຕີ: ຈັດຫ້ອງຮຽນປະຈໍາວັນ ສອນໂດຍອາສາສະມັກຊຸມຊົນ, ສະໜັບສະໜູນໂດຍອົງການ NTFP.
4. ການສົ່ງເສີມການອ່ານ: ສູນການອ່ານທີ່ມີຊີວິດຊີວາສໍາລັບນັກຮຽນຫຼັງເລີກໂຮງຮຽນ.

## ສະເຫຼີມສະຫຼອງຜົນສໍາເລັດ

ໃນປີ 2024, ສູນດັ່ງກ່າວໄດ້ສະເຫຼີມສະຫຼອງຄວາມສໍາເລັດທີ່ຍິ່ງໃຫຍ່:

- ຝຶກອົບຮົມຄູອາສາສະໝັກ 74 ຄົນ.
- ດໍາເນີນການຝຶກອົບຮົມສຸຂະສຶກສາ ມີຜູ້ເຂົ້າຮ່ວມ 484 ຄົນ.
- ດໍາເນີນການຝຶກອົບຮົມທັກສະຊີວິດສໍາເລັດ 29 ຄົນ.
- ຊ່ວຍເຫຼືອນັກຮຽນ 43 ຄົນ ໃຫ້ສໍາເລັດຫຼັກສູດຄອມພິວເຕີຂັ້ນພື້ນຖານ.
- ສະໜັບສະໜູນນັກຮຽນ 75 ຄົນໃຫ້ສໍາເລັດຫຼັກສູດພາສາອັງກິດຂັ້ນພື້ນຖານ.

## ແຮງຜັກດັນທີ່ຍັງດໍາເນີນຕໍ່ໄປ ໃນປີ 2025:

- ຝຶກອົບຮົມຄູສອນ 84 ຄົນ.
- ສ້າງຈິດສໍານຶກດ້ານສຸຂະພາບ ແລະ ການສຶກສາໃຫ້ແກ່ຜູ້ເຂົ້າຮ່ວມ 96 ທ່ານ.
- ຮັບນັກຮຽນ 28 ຄົນໃນວິຊາຄອມພິວເຕີ.

## ມຸ່ງສູ່ອະນາຄົດ

ໃນຂະນະທີ່ພວກເຮົາເບິ່ງໄປຂ້າງໜ້າ, ກະຊວງສຶກສາທິການ ໄດ້ແນະນໍາໃຫ້ສ້າງຕັ້ງຄະນະກໍາມາທິການບໍລິຫານງານ ແລະ ຍົກລະດັບທັກສະການຝຶກອົບຮົມຄູ ເພື່ອພັດທະນາສູນການຮຽນຮູ້ຕະຫຼອດຊີວິດ ກົກລັກ. ໂດຍການປັບໂຄງສ້າງພາຍໃນໃຫ້ເປັນທາງການ ແລະ ສົ່ງເສີມແຜນງານດ້ານກະສິກໍາ, ສູນດັ່ງກ່າວຈະເປັນສູນຕົວຢ່າງທີ່ໂດດເດັ່ນສໍາລັບຊຸມຊົນ.

ສູນການຮຽນຮູ້ຊຸມຊົນກົກລັກ ບໍ່ພຽງແຕ່ໂດດເດັ່ນ ໃນນາມທີ່ເປັນສະຖານທີ່ສໍາລັບການຮໍ່າຮຽນເທົ່ານັ້ນ, ແຕ່ຍັງເປັນການຢັ້ງຢືນເຖິງຄວາມເຂັ້ມແຂງ ແລະ ຄວາມສາມັກຄີຂອງປະຊາຊົນເຜົ່າກະເວັດ. ພວກເຮົາກໍາລັງຮ່ວມກັນສ້າງອະນາຄົດທີ່ສົດໃສຂຶ້ນ ເທື່ອລະກ້າວໂດຍຜ່ານການສຶກສາ. ແຕ່ລະບົດຮຽນທີ່ຖອດຖອນໄດ້ ແລະ ທຸກທັກສະທີ່ໄດ້ປະສົບມາແມ່ນພື້ນຖານສໍາຄັນໄປສູ່ຊຸມຊົນທີ່ມີຄວາມເຂັ້ມແຂງ ແລະ ເພິ່ງພາຕົນເອງໄດ້ຫຼາຍຂຶ້ນ.




ກຸ່ມນັກຜູ້ເຂົ້າຮ່ວມທີ່ຫຼາກຫຼາຍໄດ້ເຂົ້າຮ່ວມຝຶກອົບຮົມການຮູ້ໜັງສືໃຫ້ແກ່ຄູກ່ຽວກັບວິທີສອນພາສາກະເວັດ-ຂະເໝນ

# ນັກຄົ້ນຄວ້າລາວ ສຳເລັດການສຶກສາລະດັບປະລິນຍາເອກ ໃນການຮຽນຮູ້ຕະຫຼອດຊີວິດຈາກມະຫາວິທະຍາໄລ ໂຄໂລນ ໃນປະເທດເຢຍລະມັນ

*ໂດຍການສະໜັບສະໜູນຈາກ ດີວີວີ ອິນເຕີເນເຊີນແນວ, ນັກຄົ້ນຄວ້າສອງທ່ານຈາກປະເທດລາວໄດ້ສຳເລັດການສຶກສາລະດັບປະລິນຍາເອກຢູ່ທີ່ມະຫາວິທະຍາໄລໂຄໂລນ, ໂດຍສຸມໃສ່ແກ້ໄຂບັນຫາສຳຄັນດ້ານການຮຽນຮູ້ຂອງຜູ້ໃຫຍ່, ການສຶກສາ ແລະ ການຮຽນຮູ້ຕະຫຼອດຊີວິດ.*

ທ່ານ ນາງ ວັນມະນີ ວັນນະສີ ແລະ ທ່ານ ສູກສາຄອນ ແສງສຸລິຍາ ໄດ້ບັນລຸຜົນສຳເລັດທາງວິຊາການທີ່ສຳຄັນ, ການສຶກສາປະລິນຍາເອກດ້ານການຮຽນຮູ້ຕະຫຼອດຊີວິດ ແລະ ການສຶກສາຜູ້ໃຫຍ່ຈາກມະຫາວິທະຍາໄລໂຄໂລນ ໃນປະເທດເຢຍລະມັນ ໃນປີ 2025. ຜົນສຳເລັດດັ່ງກ່າວຖືເປັນບາດກ້າວສຳຄັນຂອງການຮ່ວມມືຢ່າງຕໍ່ເນື່ອງລະຫວ່າງຫ້ອງການ ດີວີວີ ອິນເຕີເນເຊີນແນວ ປະຈຳລາວ ແລະ ລັດຖະບານລາວ ໂດຍຜ່ານກະຊວງສຶກສາທິການ ແລະ ກິລາ.

ເລີ່ມແຕ່ປີ 2019, ດີວີວີ ອິນເຕີແນເຊີນແນວ ໄດ້ສະໜັບສະໜູນນັກຄົ້ນຄວ້າທັງສອງທ່ານໃນການຄົ້ນຄວ້າໃນລະດັບປະລິນຍາເອກຢູ່ເຢຍລະມັນ, ແນໃສ່ສ້າງຄວາມເຂັ້ມແຂງໃນການພັດທະນາຊັບພະຍາກອນມະນຸດຂອງຂະແໜງການສຶກສານອກໂຮງຮຽນ ແລະ ສົ່ງເສີມການຮຽນຮູ້ຕະຫຼອດຊີວິດໃນ ສປປ ລາວ. ພາຍໃຕ້ການໃຫ້ຄຳປຶກສາຂອງສາດສະດາຈານ Michael Schemmann ຈາກພາກວິຊາການສຶກສາ ແລະ ວິທະຍາສາດສັງຄົມ, ຄະນະມະນຸດສາດ, ເຂົາເຈົ້າໄດ້ດຳເນີນການຄົ້ນຄ້ວາກ່ຽວກັບຈຸດພິເສດສຳຄັນຂອງການຮຽນຮູ້ຕະຫຼອດຊີວິດໃນສະຖາບັນການສຶກສາຕ່າງໆ.

## ການຄົ້ນຄວ້າກ່ຽວກັບທ່າອ່ຽງການຮຽນຮູ້ໃນບ່ອນເຮັດວຽກ ແລະ ທ່າອ່ຽງການອອກໂຮງຮຽນຂອງນັກຮຽນຊົນເຜົ່າ

ບົດວິທະຍານິພົນຂອງທ່ານ ນາງ ວັນນະສີ ໃນຫົວຂໍ້ „ການຮຽນຮູ້ຕະຫຼອດຊີວິດໂດຍຜ່ານການຮຽນຮູ້ໃນສະຖານທີ່ເຮັດວຽກ: ທັດສະນະຂອງມະຫາວິທະຍາໄລ,“ ນຳສະເໜີພາບລວມໃນຮູບແບບທິດສະດີກ່ຽວກັບການຮຽນຮູ້ໃນສະຖານທີ່ເຮັດວຽກ. ເພິ່ນໄດ້ວິເຄາະຂໍ້ມູນໃນລັກສະນະທີ່ເປັນພາບປະຈັກຕາ ເພື່ອກຳນົດປັດໄຈສຳຄັນທີ່ມີອິດທິພົນຕໍ່ຄວາມສຳເລັດ. ໃນຂະນະດຽວກັນ, ການຄົ້ນຄວ້າ ຂອງ ທ່ານ ແສງສຸລິຍາ, „ທ່າອ່ຽງການອອກໂຮງຮຽນຂອງນັກຮຽນຊົນເຜົ່າມົ້ງໃນລາວໃນວຽກງານການສຶກສາຜູ້ໃຫຍ່“, ເພິ່ນສຶກສາໂດຍການນຳໃຊ້ວິທີການກໍລະນີສຶກສາ, ເພື່ອຄົ້ນຫາເຫດຜົນທີ່ຢູ່ເບື້ອງຫຼັງຂອງການອອກໂຮງຮຽນເຫຼົ່ານີ້ ແລະ ສະເໜີຍຸດທະສາດເພື່ອປັບປຸງການເປີດຮັບສະໝັກ ແລະ ການຮັກສາຕົວເລກນັກຮຽນຊົນເຜົ່າ, ເຊິ່ງເປັນກຸ່ມທີ່ມີຄວາມສ່ຽງ ແລະ ເຂົ້າເຖິງຍາກ.

ຜົນສຳເລັດຂອງນັກຄົ້ນຄວ້າທັງສອງທ່ານ ບໍ່ພຽງແຕ່ສະທ້ອນເຖິງຄວາມມຸ່ງໝັ້ນ ແລະ ຄວາມເປັນເລີດທາງວິຊາການເທົ່ານັ້ນ ແຕ່ຍັງສະທ້ອນເຖິງບາດກ້າວສຳຄັນໃນການສ້າງຄວາມເຂັ້ມແຂງດ້ານການຮຽນ-ການສອນສຳລັບຜູ້ໃຫຍ່ໃນລາວ. ການຄົ້ນຄວ້າຂອງເຂົາເຈົ້າຄາດວ່າຈະເປັນແຮງບັນດານໃຈໃນການລິເລີ່ມອື່ນໆ ທີ່ຈະສະໜັບສະໜູນວິໄສທັດຂອງ ດີວີວີ ອິນເຕີເນເຊີນແນວ ໃນການສະໜອງໂອກາດການຮຽນຮູ້ຕະຫຼອດຊີວິດສຳລັບທຸກຄົນ.



ທ່ານ ນາງ ວັນນະສີ (ຊ້າຍ) ແລະ ທ່ານ ແສງສຸລິຍາ (ຂວາ) ຈາກມະຫາວິທະຍາໄລແຫ່ງຊາດລາວ ໃນໄລຍະປ້ອງກັນບົດຈົບຊັ້ນປະລິນຍາເອກທີ່ຫ້ອງການ ດີວີວີ ອິນເຕີເນເຊີນແນວ ນະຄອນຫຼວງວຽງຈັນ

## ຜົນການຄົ້ນຄວ້າ ແລະ ຜົນກະທົບທີ່ອາດເກີດຂຶ້ນຕໍ່ການສຶກສາໃນລາວ

**ນາງ ວັນນະສີ, ອັນໃດທີ່ພາໃຫ້ທ່ານເລືອກການຮຽນຮູ້ໃນສະຖານທີ່ເຮັດວຽກເປັນຫົວຂໍ້ຫຼັກຂອງການຄົ້ນຄວ້າ, ແລະ ມີຫຍັງແດ່ທີ່ສຳຄັນໃນຜົນຂອງການຄົ້ນຄວ້າ?**

ການຮຽນຮູ້ໃນສະຖານທີ່ເຮັດວຽກໄດ້ຮັບການຍອມຮັບຢ່າງກວ້າງຂວາງວ່າເປັນເຄື່ອງມືອັນສຳຄັນສຳລັບການເຕີບໂຕໃນດ້ານວິຊາຊີບ ແລະ ການພັດທະນາສະຖາບັນໃນບັນດາຂະແໜງການຕ່າງໆ, ລວມທັງການສຶກສາຊັ້ນສູງ. ຢ່າງໃດກໍ່ຕາມ, ມະຫາວິທະຍາໄລມັກຈະຂາດຍຸດທະສາດທີ່ຊັດເຈນສຳລັບການຈັດຕັ້ງປະຕິບັດ. ການຄົ້ນຄວ້າຂອງຂ້າພະເຈົ້າໄດ້ກຳນົດ 10 ປັດໄຈສຳຄັນສຳລັບການປະສົມປະສານເພື່ອປະສົບຜົນສຳເລັດໃນການຈັດຕັ້ງປະຕິບັດດັ່ງນີ້:

- ຄວາມສົນໃຈສ່ວນບຸກຄົນ
- ຄວາມໝັ້ນໃຈຕົນເອງ
- ການມີສ່ວນຮ່ວມຂອງແຕ່ລະຄົນ
- ການຮຽນຮູ້ແບບກຸ່ມ
- ຄວາມໄວ້ວາງໃຈ
- ການບໍລິຫານຄຸ້ມຄອງ
- ຄວາມຊ່ຽວຊານ
- ການເຮັດວຽກຮ່ວມກັນ
- ນະໂຍບາຍ
- ວັດທະນະທຳອົງກອນ

**ຜົນກະທົບໃນທາງປະຕິບັດຂອງການຄົ້ນຄວ້າຂອງທ່ານຕໍ່ກັບການສຶກສາໃນລາວແມ່ນຫຍັງ?**

ລັດຖະບານລາວ ຊຸກຍູ້ໃຫ້ບັນດາສະຖາບັນການສຶກສາ ຊັ້ນສູງ ຫັນໄປສູ່ອົງກອນແຫ່ງການຮຽນຮູ້, ເພື່ອສະໜັບສະໜູນການຫັນປ່ຽນປະເທດ ໄປສູ່ສັງຄົມແຫ່ງຄວາມຮູ້. ການຄົ້ນຄວ້າຂອງຂ້າພະເຈົ້າໄດ້ຊີ້ໃຫ້ເຫັນເຖິງຄວາມສຳຄັນຂອງການປູກຝັງທັດສະນະຄະຕິໃນການພັດທະນາຕົນເອງໃນດ້ານການສຶກສາຢ່າງຕໍ່ເນື່ອງ ຍ້ອນວ່າມັນຈະຊ່ວຍເສີມປະສິດທິພາບໃນການເຮັດວຽກ ແລະ ໝັ້ນໃຈໄດ້ວ່າຜູ້ທີ່ມີຄວາມຮູ້ ຄວາມຊ່ຽວຊານແມ່ນມີຄວາມສາມາດໃນການແຂ່ງຂັນຢູ່ໃນສາຍອາຊີບຂອງພວກເຂົາ. ເພື່ອນຳເອົາຜົນການຄົ້ນຄວ້າເຫຼົ່ານີ້ມາຈັດຕັ້ງປະຕິບັດ, ມະຫາວິທະຍາໄລແຫ່ງຊາດ ຄວນໃຫ້ຄວາມສຳຄັນແກ່ໂອກາດການຮຽນຮູ້ຕະຫຼອດຊີວິດຂອງພະນັກງານໂດຍການປະຕິບັດ:

- ແຜນງານການຝຶກອົບຮົມວິຊາການສະເພາະ
- ເວທີສົນທະນາ ແລະ ແລກປ່ຽນຄວາມຮູ້
- ວັດທະນະທຳແຫ່ງການພັດທະນາຢ່າງຕໍ່ເນື່ອງໂດຍຜ່ານ:
- ການປະເມີນຕົນເອງ
- ການແກ້ໄຂຈຸດອ່ອນຂອງສະຖາບັນ
- ການສ້າງສະພາບແວດລ້ອມການຮຽນຮູ້ທີ່ມີການປັບປຸ່ງ

**ທ່ານ ແສງສຸລິຍາ, ການສຶກສາຂອງທ່ານໄດ້ສຳຫຼວດຫາທ່າອ່ຽງການອອກໂຮງຮຽນຂອງນັກຮຽນຊົນເຜົ່າມົ້ງລາວ. ເຫດຜົນສຳຄັນທີ່ສຸດໃນການອອກໂຮງຮຽນ ທີ່ທ່ານໄດ້ກຳນົດແມ່ນຫຍັງ, ແລະ ທ່ານມີຍຸດທະສາດອັນໃດແດ່ທີ່ຈະປັບປຸງ?**

ບັນຫາການອອກໂຮງຮຽນຂອງນັກຮຽນຊົນເຜົ່າແມ່ນມີຄວາມຊັບຊ້ອນ ແລະ ການສັງລວມບັນດາປັດໄຈທີ່ຢູ່ເບື້ອງຫຼັງນັ້ນ ເປັນສິ່ງທີ່ທ້າທາຍ. ກໍລະນີສຶກສາຂອງຂ້າພະເຈົ້າກ່ຽວກັບຊົນເຜົ່າມົ້ງລາວ ປະກອບສ່ວນເຂົ້າໃນການຄົ້ນຄວ້າທີ່ມີຢູ່ແລ້ວກ່ຽວກັບຫົວຂໍ້ນີ້. ການຄົ້ນພົບຂອງຂ້າພະເຈົ້າຊີ້ໃຫ້ເຫັນວ່າປັດໄຈທີ່ກ່ຽວຂ້ອງກັບຄອບຄົວແມ່ນເຫດຜົນຕົ້ນຕໍທີ່ເຮັດໃຫ້ນັກຮຽນເຜົ່າມົ້ງອອກຈາກການສຶກສາຊັ້ນສູງ. ເພື່ອປັບປຸງອັດຕາການຮັກສານັກຮຽນໄວ້, ຂ້າພະເຈົ້າຂໍແນະນຳຍຸດທະສາດທີ່ສຳຄັນເຊັ່ນ:

- ສັນຫາບຸກຄະລາກອນປະຈຳຄະນະວິຊາຈາກພື້ນຖານຊົນເຜົ່າ
- ການສະໜອງການບໍລິການທີ່ສະໜັບສະໜູນທາງດ້ານຈິດໃຈ
- ສ້າງຕັ້ງໂຄງການຊ່ວຍເຫຼືອດ້ານງົບປະມານເພື່ອຊ່ວຍເຫຼືອນັກຮຽນຈາກຄອບຄົວທີ່ດ້ອຍໂອກາດທາງດ້ານເສດຖະກິດ

**ຕອນນີ້ທ່ານໄດ້ສຳເລັດປະລິນຍາເອກແລ້ວ, ທ່ານວາງແຜນທີ່ຈະໃຊ້ການຄົ້ນຄວ້າຂອງທ່ານແນວໃດ?**

ເປົ້າໝາຍການພັດທະນາແບບຍືນຍົງ 4 (SDG 4) ເນັ້ນໜັກວ່າ ຄຸນນະພາບການສຶກສາຄວນຖືກວັດແທກດ້ວຍຄວາມສະເໝີພາບ ແລະ ການເຂົ້າເຖິງທີ່ເທົ່າທຽມກັນ. ການຄົ້ນຄວ້າຂອງຂ້າພະເຈົ້າໃຫ້ຄວາມເຂົ້າໃຈອັນມີຄ່າສຳລັບນັກການສຶກສາ ແລະ ຜູ້ກຳນົດນະໂຍບາຍ ໃນລາວ ໂດຍການຍົກໃຫ້ເຫັນສິ່ງທ້າທາຍຢ່າງຕໍ່ເນື່ອງໃນການສຶກສາຊັ້ນສູງ. ໂດຍການແບ່ງປັນຜົນການຄົ້ນຄວ້າເຫຼົ່ານີ້ກັບສະຖາບັນອື່ນໆ ໃນວົງກວ້າງ, ຂ້າພະເຈົ້າຫວັງວ່າຈະຊ່ວຍໃຫ້ຜູ້ສອນປັບປຸງວິທີການສອນ ແລະ ຍຸດທະສາດການສອນ ເພື່ອສະໜັບສະໜູນຜູ້ຮຽນທີ່ມາຈາກພື້ນຖານທີ່ຫຼາກຫຼາຍ. ຄວາມເຂົ້າໃຈທີ່ເລິກເຊິ່ງຂຶ້ນກ່ຽວກັບຄວາມຕ້ອງການສະເພາະຂອງນັກຮຽນສາມາດຊ່ວຍໃຫ້ນັກການສຶກສາສ້າງສະພາບແວດລ້ອມການຮຽນຮູ້ທີ່ເປັນອົງລວມ ແລະ ໃຫ້ການສະໜັບສະໜູນຫຼາຍຂຶ້ນ ເຊິ່ງໃນທີ່ສຸດກໍ່ຈະສົ່ງເສີມຄວາມສຳເລັດທາງວິຊາການ.

# ທັກສະດີຈີຕອນ ແລະ ການຮຽນຮູ້ຕະຫຼອດຊີວິດ



*ດາລຸນນີ ສີສຸລາດ*
ດີວີວີ ອິນເຕີເນເຊີນແນວ, ລາວ

ສັງຄົມເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານເປັນປັດໄຈຫຼັກໃນການຂັບເຄື່ອນສັງຄົມການຮຽນຮູ້ຕະຫຼອດຊີວິດ ແລະ ມັນໄດ້ກາຍເປັນສິ່ງສຳຄັນຢ່າງຍິ່ງສຳລັບຍຸກປະຈຸບັນ. ການຮຽນຮູ້ຕະຫຼອດຊີວິດບໍ່ໄດ້ຈຳກັດຢູ່ພຽງແຕ່ໃນຫ້ອງຮຽນ ຫຼື ສະຖາບັນການສຶກສາ, ແນວຄວາມຄິດການຮຽນຮູ້ຕະຫຼອດຊີວິດໃນຍຸກດີຈີຕອນ ສາມາດຊ່ວຍໃຫ້ທຸກຄົນໄດ້ເຂົ້າເຖິງຄວາມຮູ້ ແລະ ທັກສະໃໝ່ໆ ໄດ້ຕະຫຼອດເວລາ ແລະ ທຸກທີ່ທຸກແຫ່ງ. ໃນປະຈຸບັນ, ໂລກຂອງເຮົາກຳລັງໝູນໄປພ້ອມກັບ ກັບຂໍ້ມູນຂ່າວສານ ແລະ ຄວາມຮູ້ທີ່ເພີ່ມຂຶ້ນມາເລື້ອຍໆ, ມີຄວາມຮູ້ ແລະ ເຕັກໂນໂລຊີໃໝ່ໆ ເກີດຂຶ້ນຕະຫຼອດເວລາ. ທຸກຄົນ ແລະ ທຸກຊ່ວງໄວຈຳເປັນຕ້ອງໄດ້ປັບຕົວໃຫ້ທັນໂລກຢູ່ະເໝີ ການຮຽນຮູ້ຢ່າງຕໍ່ເນື່ອງ ແລະ ບໍ່ສິ້ນສຸດ ເທົ່ານັ້ນ ຈຶ່ງຈະເຮັດໃຫ້ເຮົາຢູ່ໃນສັງຄົມໄດ້ຢ່າງເໝາະສົມ ແລະ ມີຄວາມສຸກທັງໃນປະຈຸບັນ ແລະ ອະນາຄົດ.

## ການຮູ້ເຕັກໂນໂລຊີດີຈີຕອນແມ່ນຫຍັງ?

**ການຮູ້ເຕັກໂນໂລຊີດີຈີຕອນ** ແມ່ນທັກສະຄວາມເຂົ້າໃຈ ແລະ ນຳໃຊ້ເຕັກໂນໂລຊີ ດີຈີຕອນ ເຊິ່ງໝາຍເຖິງທັກສະໃນການນຳເຄື່ອງມື, ອຸປະກອນ ແລະ ເຕັກໂນໂລຊີດີຈີຕອນທີ່ມີຢູ່ໃນປັດຈຸບັນ ເຊັ່ນ: ຄອມພິວເຕີ, ໂທລະສັບ, ແທັບເລັດ, ໂປຣແກຣມຄອມພິວເຕີ ແລະ ສື່ອອນລາຍ ມາໃຊ້ໃຫ້ເກີດປະໂຫຍດສູງສູດໃນການສື່ສານ, ການດຳລົງຊີວິດ ແລະ ການເຮັດວຽກຮ່ວມກັນ ຫຼືໃຊ້ເພື່ອພັດທະນາຂະບວນການເຮັດວຽກໃຫ້ທັນສະໄໝ ແລະ ມີປະສິດທິພາບ.

**ທັກສະດີຈີຕອນ**ແມ່ນໝາຍເຖິງຄວາມສາມາດໃນການເຂົ້າໃຈ, ເຂົ້າເຖິງ ແລະ ໃຊ້ເຕັກໂນໂລຊີດີຈີຕອນທີ່ມີຢູ່ໄດ້ຢ່າງມີປະສິດທິພາບ ເປັນທັກສະພື້ນຖານສຳຄັນທີ່ທຸກຄົນຄວນມີ ເພາະທັກສະນີ້ເປັນຕົວຊ່ວຍໃນການຕໍ່ຍອດໄປສູ່ທັກສະອື່ນໆ ໂດຍສະເພາະ ໃນການສົ່ງເສີມໃນດ້ານວິຊາການ.

**ການຮຽນຮູ້ທັກສະດີຈີຕອນ**ໂດຍໃຊ້ເຄື່ອງມື ແລະ ເຕັກໂນໂລຊີດີຈີຕອນ ເພື່ອເສີມສ້າງຄວາມຮູ້ ແລະ ທັກສະ ທີ່ຈຳເປັນຕໍ່ການດຳລົງຊີວິດ ໃນຍຸກປະຈຸບັນ, ແນວຄວາມຄິດນີ້ເນັ້ນໃຫ້ຜູ້ຮຽນສາມາດປັບຕົວເຂົ້າກັບການປ່ຽນແປງຂອງເຕັກໂນໂລຊີ ແລະ ສັງຄົມໄດ້ໄວຂຶ້ນ, ນອກຈາກນີ້ ຍັງຊ່ວຍສົ່ງເສີມການຮຽນຮູ້ທີ່ເປັນອິດສະຫຼະ ເຊິ່ງຜູ້ຮຽນສາມາດເລືອກຮຽນຮູ້ໃນສິ່ງທີ່ຕົນເອງສົນໃຈ ແລະ ຕ້ອງການໄດ້ຕະຫຼອດເວລາ.

**ຍຸດທະສາດ ດີຈີຕອນ ສຳລັບການສຶກສາ 2025-2035**
**ກະຊວງສຶກສາທິການ ແລະ ກິລາ**

ຂົງເຂດບູລິມະສິດຂອງຍຸດທະສາດ

ການເຂົ້າເຖິງດີຈີຕອນ

ເສີມຂະຫຍາຍພື້ນຖານໂຄງລ່າງດ້ານດີຈີຕອນ ເພື່ອຮັບປະກັນການເຊື່ອມຕໍ່ອິນເຕີເນັດ ທີ່ມີຄວາມສະຖຽນ ແລະ ການເຂົ້າເຖິງອຸປະກອນດີຈີຕອນໃນທົ່ວທຸກຂົງເຂດ ໂດຍສະເພາະໃນເຂດທີ່ດ້ອຍໂອກາດ.

ທັກສະດ້ານດີຈີຕອນ

ສ້າງຂີດຄວາມສາມາດດ້ານດີຈີຕອນໃຫ້ແກ່ຄູສອນ, ນັກຮຽນ-ນັກສຶກສາ ແລະ ຜູ້ບໍລິຫານການສຶກສາ ເພື່ອນຳໃຊ້ເຄື່ອງມື ແລະ ແພັດຟອມ ດີຈີຕອນຢ່າງມີປະສິດທິພາບ.

ຂໍ້ມູນຂ່າວສານດີຈີຕອນ

ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງ ແລະ ນຳໃຊ້ຂໍ້ມູນຜ່ານລະບົບຂໍ້ມູນຂ່າວສານ ທີ່ເຂັ້ມແຂງ ເພື່ອຊ່ວຍໃນການຕັດສິນໃຈບົນພື້ນຖານຂອງຂໍ້ມູນ ແລະ ປັບປຸງຜົນໄດ້ຮັບດ້ານການສຶກສາ.

ການຮຽນຮູ້ດີຈີຕອນ

ນຳໃຊ້ປະໂຫຍດຈາກແພັດຟອມດີຈີຕອນ ເພື່ອສະໜັບສະໜູນການຮຽນ-ການສອນ, ສະໜອງເນື້ອຫາທ້ອງຖິ່ນທີ່ມີຄຸນນະພາບສູງ ແລະ ສົ່ງເສີມການພັດທະນາວິຊາຊີບຢ່າງຕໍ່ເນື່ອງໃຫ້ແກ່ຄູສອນ.

## ເປັນຫຍັງທັກສະດີຈີຕອນຈຶ່ງສຳຄັນ?

ໃນປະຈຸບັນໂລກມີການປ່ຽນແປງໄປຢ່າງໄວວາ, ການເຮັດວຽກທີ່ເຮົາເຄີຍຮັບຮູ້ ແລະ ເຂົ້າໃຈວ່າເປັນວຽກທີ່ໝັ້ນຄົງອາດຖືກທົດແທນດ້ວຍເຕັກໂນໂລຊີໃໝ່ໆ ແລະ ຄວາມຕ້ອງການຂອງຕະຫຼອດແຮງງານກໍ່ມີການປ່ຽນແປງໄປຕະຫຼອດ. ການຮຽນຮູ້ຕະຫຼອດຊີວິດໃນຮູບແບບດີຈີຕອນຈຶ່ງສຳຄັນຫຼາຍ ເພາະວ່າ:

- **ການປັບຕົວຕໍ່ການປ່ຽນແປງ**: ທັກສະທີ່ຈຳເປັນໃນການເຮັດວຽກປະຈຸບັນອາດປ່ຽນແປງໄດ້ຕະຫຼອດເວລາ, ການຮຽນຮູ້ຕະຫຼອດຊີວິດ ຈະຊ່ວຍໃຫ້ຄົນລຸ້ນໃໝ່ສາມາດປັບຕົວ ແລະ ຮັບມືກັບການປ່ຽນແປງທີ່ເກີດຂຶ້ນໄດ້ຢ່າງມີປະສິດທິພາບ.
- **ການເພີ່ມພູນທັກສະໃໝ່**: ທັກສະດີຈີຕອນເປີດໂອກາດໃຫ້ຜູ້ຮຽນໄດ້ເພີ່ມພູນທັກສະໃໝ່ທີ່ຈຳເປັນໃນການເຮັດວຽກ ຫຼື ການດຳລົງຊີວິດປະຈຳວັນ ບໍ່ວ່າຈະເປັນທັກສະດ້ານເຕັກໂນໂລຊີ, ດ້ານທຸລະກິດ ຫຼື ການສື່ສານ.
- **ການສົ່ງເສີມຄວາມຄິດສ້າງສັນ**: ການຮຽນຮູ້ຕະຫຼອດຊີວິດ ຊ່ວຍກະຕຸ້ນໃຫ້ເກີດຄວາມຄິດສ້າງສັນ ແລະ ນະວັດຕະກຳໃໝ່ໆ, ການເຂົ້າເຖິງຂໍ້ມູນ ແລະ ຊັບພະຍາກອນທີ່ຫຼາກຫຼາຍທາງອອນລາຍ ຊ່ວຍໃຫ້ຜູ້ຮຽນມີມຸມມອງທີ່ກ້ວາງຂຶ້ນ ແລະ ສາມາດຄິດຄົ້ນສິ່ງໃໝ່ໆໄດ້.
- **ການສ້າງເຄືອຂ່າຍ ແລະ ການເຊື່ອມຕໍ່**: ການຮຽນຮູ້ຜ່ານດີຈີຕອນ ເປີດໂອກາດໃຫ້ຜູ້ຮຽນໄດ້ເຊື່ອມຕໍ່ກັບຜູ້ຊ່ຽວຊານ ແລະ ຜູ້ຮຽນຄົນອື່ນໆທົ່ວໂລກ ຜ່ານແພັດຟອມ (Platform)ການຮຽນຮູ້ອອນລາຍ ການສ້າງເຄືອຂ່າຍການຮຽນຮູ້ເປັນສິ່ງສຳຄັນ ຊ່ວຍສົ່ງເສີມການແລກປ່ຽນຄວາມຮູ້ ແລະ ປະສົບການ.

ເພື່ອໃຫ້ສາມາດເຂົ້າເຖິງຜົນປະໂຫຍດເຫຼົ່ານີ້, ການຮຽນຮູ້ຕະຫຼອດຊີວິດຕ້ອງສາມາດເຂົ້າເຖິງໄດ້, ປ່ຽນແປງໄດ້, ແລະ ປັບໃຫ້ເໝາະສົມກັບຄວາມຕ້ອງການ. ໃນຍຸກດີຈີຕອນ, ການຮຽນຮູ້ແມ່ນເປັນໄປໄດ້ໂດຍຜ່ານຮູບແບບທີ່ຫຼາກຫຼາຍ ພຽງແຕ່ຕ້ອງປັບຕົວໃຫ້ເຂົ້າກັບເປົ້າໝາຍ ແລະ ຄວາມມັກຂອງບຸກຄົນ ເຊັ່ນ:

- **ການຮຽນແບບອອນລາຍ**: ແພັດຟອມການຮຽນຮູ້ອອນລາຍເປີດໂອກາດໃຫ້ຜູ້ຮຽນສາມາດຮຽນຮູ້ໄດ້ຈາກຜູ້ຊ່ຽວຊານຈາກທົ່ວໂລກ ໂດຍທີ່ເຮົາບໍ່ຈຳເປັນຕ້ອງອອກນອກບ້ານ, ການຮຽນອອນລາຍແມ່ນມີຫຼາຍສາຂາວິຊາ ເຊັ່ນ: ພາສາອັງກິດ, ການຕະຫຼາດ, ການຄິດຜະລິດຕະພັນ, ການອອກແບບ. ການຝຶກອົບຮົມວິຊາຊີບເຊັ່ນ: ການປູກຝັງ, ລ້ຽງສັດ, ການເຮັດເຄື່ອງຈັກສານ, ການເພາະພັນໄມ້ ແລະ ອື່ນໆ.
- **ການຮຽນຮູ້ຜ່ານ ສື່ສັງຄົມອອນລາຍ**: ສື່ສັງຄົມອອນລາຍ ບໍ່ແມ່ນພຽງແຕ່ເປັນເຄື່ອງມືສື່ສານ ແຕ່ຍັງເປັນແຫຼ່ງຂໍ້ມູນ ແລະ ການຮຽນຮູ້ທີ່ມີປະສິດທິພາບ ຜູ້ໃຊ້ງານສາມາດຕິດຕາມ ຜູ້ຊ່ຽວຊານດ້ານຕ່າງໆ ແລະ ເຂົ້າເຖິງຫົວຂໍ້ ຫຼື ເນື້ອໃນທີ່ມີຄຸນຄ່າໄດ້ຕະຫຼອດເວລາ.
- **ການຮຽນຮູ້ຜ່ານການເຮັດວຽກ**: ທັກສະດີຈີຕອນຍັງສາມາດພັດທະນາໄດ້ໃນສະພາບແວດລ້ອມຊີວິດຈິງເຊັ່ນການຝຶກງານ, ໂຄງການທີມງານ, ຫຼືກອງປະຊຸມ.
- **ປັນຍາປະດິດ (Artificial Intelligence (AI))**: ສ້າງປະສົບການຮຽນຮູ້ທີ່ສະເພາະເຈາະຈົງ, ການໃຊ້ແບບຈຳລອງ (Virtual reality (VR)) ເພື່ອຈຳລອງສະພາບແວດລ້ອມການຮຽນຮູ້ໃນອະນາຄົດອັນໃກ້ນີ້.

ການຮຽນຮູ້ຕະຫຼອດຊີວິດ ຈະກາຍເປັນສິ່ງທີ່ຈຳເປັນ ເພື່ອຄວາມກ້າວໜ້າໃນດ້ານອາຊີບ, ສະພາບແວດລ້ອມການເຮັດວຽກໃນປະຈຸບັນແມ່ນມີການປ່ຽນແປງ ຢ່າງຕໍ່ເນື່ອງໂດຍຜ່ານເຕັກໂນໂລຊີ. ການໃຊ້ເຄື່ອງມືດີຈີຕອນທີ່ຫຼາກຫຼາຍຈະຊ່ວຍໃຫ້ເຕີບໂຕໃນໂລກທີ່ມີການປ່ຽນແປງຕະຫຼອດເວລາ ສິ່ງສຳຄັນທີ່ສຸດໃນປະຈຸບັນນີ້ ຄືຄວາມກ້າທີ່ຈະຍອມຮັບການປ່ຽນແປງ ແລະ ກ້າວໄປຂ້າງໜ້າໃນໂລກທີ່ມີການປ່ຽນແປງໄດ້ຢ່າງໝັ້ນຄົງ.

# ການຂັບເຄື່ອນການປ່ຽນແປງຜ່ານການສຶກສາຜູ້ໃຫຍ່: 13 ຄູຝຶກຫຼັກ ໃນ ສປປ ລາວ

*ປ່າກູ້ລີ ໄຊຍະຊ້າງ*
ດີວີວີ ອິນເຕີເນເຊິນແນວ, ລາວ

ພວກເຂົາເຈົ້າບໍ່ພຽງແຕ່ສອນ - ແຕ່ພວກເຂົາຫັນປ່ຽນ. ໃນທົ່ວປະເທດ ສປປ ລາວ, ກຸ່ມຄູຝຶກຫຼັກ 13 ທ່ານ ກໍາລັງປັບປ່ຽນຮູບແບບການສຶກສານອກໂຮງຮຽນ. ນັກການສຶກສາຜູ້ໃຫຍ່ທີ່ມີຄວາມຊໍານິຊໍານານສູງເຫຼົ່ານີ້ ບໍ່ໄດ້ເປັນພຽງແຕ່ຜູ້ສອນ: ພວກເຂົາເປັນຜູ້ອໍານວຍຄວາມສະດວກໃນການປ່ຽນແປງ ແລະ ນໍາພາຊຸມຊົນດ້ວຍຄວາມຮູ້ໃນການປະຕິບັດ, ດ້ວຍຄວາມເຫັນອົກເຫັນໃຈ ແລະ ຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບສິ່ງທີ່ຜູ້ຮຽນຜູ້ໃຫຍ່ຕ້ອງການຢ່າງແທ້ຈິງ.

ວຽກງານຂອງພວກເຂົາເຈົ້າແມ່ນຫຼາຍກວ່າຢູ່ໃນຫ້ອງຮຽນ. ບໍ່ວ່າຈະເປັນການຝຶກອົບຮົມຜູ້ນໍາຊາວໜຸ່ມ, ການສະໜັບສະໜູນການສ້າງຄວາມເຂັ້ມແຂງຂອງແມ່ຍິງ ຫຼື ການສົ່ງເສີມດ້ານສຸຂະພາບ ແລະ ຊີວິດການເປັນຢູ່ໃນຊຸມຊົນຊົນນະບົດ - ຄູຝຶກເຫຼົ່ານີ້ໄດ້ມອບການສຶກສາທີ່ກ່ຽວຂ້ອງ, ຕົງປະເດັນ ແລະ ເນັ້ນຜູ້ຮຽນເປັນສູນກາງ ເຊິ່ງຕອບສະໜອງໂດຍກົງກັບສະພາບຕົວຈິງຂອງທ້ອງຖິ່ນ.

ໃນລະຫວ່າງປີ 2016-2017, ໄດ້ມີສ້າງກຸ່ມຄູຝຶກໃນເບື້ອງຕົ້ນໂດຍແມ່ນການເປັນຄູ່ຮ່ວມພັດທະນາທີ່ມີມາແຕ່ດົນນານລະຫວ່າງກະຊວງສຶກສາທິການ ແລະ ກິລາ ແລະ ດີວີວີ ອິນເຕີເນເຊິນແນວ. ຄູຝຶກຫຼັກເຫຼົ່ານີ້ໄດ້ຮັບການຝຶກອົບຮົມຢ່າງພິຖີພິຖັນໂດຍຊ່ຽວຊານຈາກສາກົນ ແລະ ສະຖາບັນແຫ່ງຊາດ ລວມທັງກົມການສຶກສານອກໂຮງຮຽນ (ກສນ) ແລະ ສູນພັດທະນາການສຶກສານອກໂຮງຮຽນ. ການຝຶກອົບຮົມຂອງເຂົາເຈົ້າແມ່ນອີງໃສ່ຫຼັກສູດ Curriculum globALE, ເຊິ່ງເປັນກອບແນວຄວາມຄິດທີ່ມີ ຫ້າ ພາກ ທີ່ພັດທະນາໂດຍຫ້ອງການໃຫຍ່ຂອງ ດີວີວີ ອິນເຕີເນເຊິນແນວ ໃນເຢຍລະມັນ, ເຊິ່ງຖືກອອກແບບມາເພື່ອພັດທະນາວິຊາຊີບນັກການສຶກສາຜູ້ໃຫຍ່ໃນທົ່ວໂລກ.

## ຫ້າພາກກວມເອົາເນື້ອໃນຂອງການຮຽນຮູ້ຂອງຜູ້ໃຫຍ່

- ພາກທີ 1: ພື້ນຖານການຮຽນຮູ້ ແລະ ການສຶກສາຂອງຜູ້ໃຫຍ່ - ໃຫ້ຄວາມເຂົ້າໃຈພື້ນຖານ ແລະ ຄວາມສໍາຄັນຂອງການສຶກສາ ແລະ ການຮຽນຮູ້ຂອງຜູ້ໃຫຍ່ - ລວມທັງແນວຄວາມຄິດຫຼັກ, ຄ່ານິຍົມ, ບົດບາດ ແລະ ບໍລິບົດທາງວັດທະນະທໍາ.

- ພາກທີ 2: ການຮຽນຮູ້ຂອງຜູ້ໃຫຍ່ ແລະ ການສອນຂອງຜູ້ໃຫຍ່ - ຄົ້ນຄວ້າທິດສະດີການຮຽນຮູ້ທີ່ສໍາຄັນ, ຂະບວນການການຮຽນຮູ້ຂອງຜູ້ໃຫຍ່, ຫຼັກການສອນ, ປະເພດຂອງຄວາມຮູ້, ແຮງຈູງໃຈການຮຽນຮູ້ ແລະ ອຸປະສັກຕໍ່ການມີສ່ວນຮ່ວມ.

- ພາກທີ 3: ການສື່ສານ ແລະ ການຂັບເຄື່ອນໃນກຸ່ມການຮຽນຮູ້ ແລະ ການສຶກສາຂອງຜູ້ໃຫຍ່ - ສຸມໃສ່ການສື່ສານ ແລະ ການຂັບເຄື່ອນຂອງກຸ່ມການສຶກສາຂອງຜູ້ໃຫຍ່, ກວມເອົາທິດສະດີການສື່ສານ, ເຕັກນິກ ແລະ ຍຸດທະສາດສໍາລັບການບໍລິຫານຂະບວນການກຸ່ມ, ບົດບາດ ແລະ ຂໍ້ຂັດແຍ່ງໃນສະພາບແວດລ້ອມການຮຽນຮູ້ທີ່ຫຼາກຫຼາຍ.

- ພາກທີ 4: ວິທີການຂອງການຮຽນຮູ້ ແລະ ການສຶກສາຂອງຜູ້ໃຫຍ່ - ກວມເອົາການໃຊ້ວິທີການທີ່ຫຼາກຫຼາຍ, ເນັ້ນໃຫ້ຜູ້ຮຽນໃນການສຶກສາຜູ້ໃຫຍ່, ສຸມໃສ່ການນໍາໄປໃຊ້ໃນພາກປະຕິບັດ, ການປັບຕົວ ແລະ ສອດຄອງກັບຄວາມຕ້ອງການຂອງກຸ່ມ ແລະ ເປົ້າໝາຍການຮຽນຮູ້.

- ພາກທີ 5: ການວາງແຜນ, ການບໍລິຫານຈັດການ ແລະ ການປະເມີນຜົນການຮຽນ ແລະ ການສຶກສາຂອງຜູ້ໃຫຍ່ - ກວມເອົາທັງໝົດວົງຈອນການສຶກສາຜູ້ໃຫຍ່ຢ່າງເຕັມສ່ວນ-ເລີ່ມແຕ່ການປະເມີນຄວາມຕ້ອງການ, ການວາງແຜນ ແລະ ການບໍລິຫານຈັດການຈົນເຖິງການປະຕິບັດ ແລະ ການປະເມີນຜົນໂດຍເນັ້ນໃສ່ການປະກັນຄຸນນະພາບໃນທຸກລະດັບຂອງການປະຕິບັດທາງການສຶກສາ.

ກ່ອນເລີ່ມຕົ້ນການຝຶກອົບຮົມ, ຄູຝຶກເຫຼົ່ານີ້ດໍາເນີນການປະເມີນຄວາມຕ້ອງການຢ່າງລະອຽດເພື່ອອອກແບບເນື້ອໃນ ແລະ ວິທີການ. ການອອກແບບໂດຍໃຊ້ວິທີການມີສ່ວນຮ່ວມຈາກປື້ມຄູ່ມືກ່ຽວກັບການຝຶກອົບຮົມແບບມີສ່ວນຮ່ວມສໍາລັບການຮຽນຮູ້ຂອງຜູ້ໃຫຍ່ໃນຂະແໜງການສຶກສານອກໂຮງຮຽນ, ພວກເຂົາສ້າງສະພາບແວດລ້ອມແບບມີສ່ວນຮ່ວມ ແລະ ມີປະຕິສໍາພັນກັບຜູ້ຮຽນຜູ້ໃຫຍ່ ເຊິ່ງຜູ້ຮຽນຜູ້ໃຫຍ່ສາມາດປະກອບສ່ວນຢ່າງຈິງຈັງ ແລະ ສ້າງປະສົບການຂອງເຂົາເຈົ້າໄດ້ຢ່າງກະຕືລືລົ້ນ. ແນວທາງທີ່ເນັ້ນຜູ້ຮຽນເປັນສູນກາງ ແລະ ເນັ້ນການປະຕິບັດໄດ້ຈິງ, ເພື່ອຮັບປະກັນການມີສ່ວນຮ່ວມທີ່ເຂັ້ມແຂງ ແລະ ໄດ້ຮັບຜົນກະທົບທີ່ແທ້ຈິງ.

## ການຝຶກອົບຮົມພາກປະຕິບັດໃຫ້ຜົນໄດ້ຮັບທີ່ສາມາດວັດແທກໄດ້

ການຝຶກອົບຮົມທີ່ຜ່ານມາກັບພະນັກງານຂອງກະຊວງກະສິກໍາ ແລະ ປ່າໄມ້ໃນເດືອນມີນາ 2025 ສະແດງໃຫ້ເຫັນຜົນກະທົບຂອງວິທີການນີ້. ຄູຝຶກໄດ້ສະໜັບສະໜູນຜູ້ເຂົ້າຮ່ວມໃນການພັດທະນາແບບແຜນບົດຮຽນຂອງຕົນເອງ, ໃຫ້ຄໍາແນະນໍາທີ່ສ້າງສັນ ແລະ ນໍາພາສາທິດການຮຽນການສອນ. ເປັນຜົນໃຫ້ 85% ຂອງຜູ້ເຂົ້າຮ່ວມບັນລຸລະດັບຄວາມສາມາດທີ່ເຂັ້ມແຂງໃນການເປັນຄູຝຶກ. ການປະເມີນກ່ອນ ແລະ ຫຼັງການຝຶກອົບຮົມໄດ້ ສະແດງໃຫ້ເຫັນເຖິງຄວາມກ້າວໜ້າຢ່າງມີຄວາມໝາຍສໍາຄັນໃນດ້ານຄວາມຮູ້ຄວາມສາມາດກ່ຽວກັບຫຼັກການ ແລະ ວິທີການສຶກສາສໍາລັບຜູ້ໃຫຍ່.

## ສົ່ງເສີມການຮຽນຮູ້ຕະຫຼອດຊີວິດ ແລະ ການແລກປ່ຽນໃນກຸ່ມຜູ້ຮຽນ

"ຊຸມຊົນແຫ່ງການຝຶກປະຕິບັດ" ທີ່ ດີວີວີ ອິນເຕີເນເຊິນແນວ ກໍາລັງດໍາເນີນຢູ່ຊ່ວຍເສີມສ້າງຄວາມເຂັ້ມແຂງໃຫ້ແກ່ກຸ່ມຄູຝຶກຫຼັກນີ້, ຮັບປະກັນການສະທ້ອນ ແລະ ການປັບປຸງຢ່າງຕໍ່ເນື່ອງ. ຄວາມມຸ່ງໝັ້ນໃນການຮຽນຮູ້ຕະຫຼອດຊີວິດຈາກຄູຝຶກ ຮັບປະກັນວ່າເຂົາເຈົ້າຍັງຄົງຢູ່ໃນແຖວໜ້າຂອງນະວັດຕະກໍາການສຶກສາໃນລາວ. ຄູຝຶກຫຼັກເຫຼົ່ານີ້ບໍ່ພຽງແຕ່ເປັນກຸ່ມຜູ້ຊ່ຽວຊານທີ່ມີຄວາມຊໍານານເທົ່ານັ້ນ; ເຂົາເຈົ້າເປັນຫົວໃຈສໍາຄັນຂອງການສຶກສານອກໂຮງຮຽນໃນ ສປປ ລາວ, ສ້າງອະນາຄົດທີ່ສົດໃສໃຫ້ແກ່ບຸກຄົນ ແລະ ຊຸມຊົນ ໂດຍການສົ່ງເສີມວັດທະນະທໍາການຮຽນຮູ້ ແລະ ການສ້າງຄວາມເຂັ້ມແຂງຢ່າງຕໍ່ເນື່ອງ. ການອຸທິດຕົນ ແລະ ແນວທາງນະວັດຕະກໍາຂອງເຂົາເຈົ້າ ເປັນການຢັ້ງຢືນເຖິງຄວາມມຸ່ງໝັ້ນຂອງລາວ ເພື່ອຮັບປະກັນວ່າບໍ່ມີໃຜຖືກປະຖິ້ມໄວ້ຂ້າງຫຼັງໃນການເດີນທາງຂອງການພັດທະນາ.




ຄູຝຶກຫຼັກກັບຜູ້ຊ່ຽວຊານສາກົນໃນໄລຍະຝຶກອົບຮົມທົບທວນຄືນ

**DVV International (ຫ້ອງການໃຫຍ່)**
https://www.dvv-international.de/en

**ແຫຼ່ງຂໍ້ມູນຈາກພາກພື້ນ**
https://www.dvv-international.la/news/publications https://www.aspbae.org
https://www.uil.unesco.org/en/library
https://seameocelll.org/publications

**ທີມບັນນາທິການ**: ດາລຸນນີ ສີສຸລາດ, Katharina Zeck, ຂັນທອງ ອິນທະຈັກ, ດອກຄຳ ຊຸ່ມສີຫາປັນຍາ, ສົມໃຈ ແກ້ວເມກ

**ຫົວໜ້າບັນນາທິການ**: Christoph Jost, ຜູ້ອຳນວຍການປະຈຳພາກພື້ນອາຊີຕາເວັນອອກສ່ຽງໃຕ້

**ຈັດພິມໂດຍ ຮ່ວມມືກັບຄູ່ຮ່ວມງານໃນ ສປປ ລາວ, ກຳປູເຈຍ, ອາຊີຕາເວັນອອກສ່ຽງໃຕ້.**

**ສື່ສິ່ງພິມ**
ປື້ມຄູ່ມືການຝຶກອົບຮົມການຈັດກິດຈະກຳສຳລັບເດັກ ແລະ ໄວໜຸ່ມ
ປື້ມຄູ່ມືການຝຶກອົບຮົມສຳລັບຄູຝຶກທັກສະຊີວິດສຳລັບຊາວໜຸ່ມ
ປື້ມຄູ່ມືຝຶກອົບຮົມຄູຝຶກໃນການສົ່ງເສີມຄູ່ວາມກ້າວໜ້າຂອງແມ່ຍິງ
ຫຼັກສູດ managerALE
ຫຼັກສູດ institutionALE
ຫຼັກສູດ globALE
ປື້ມຄູ່ມືການຝຶກອົບຮົມແບບມີສ່ວນຮ່ວມສຳລັບການສຶກສາຜູ້ໃຫຍ່
ປື້ມຄູ່ມືຝຶກອົບຮົມທັກສະສັງຄົມສຳລັບຄູຝຶກ
ບົດລາຍງານປະຈຳປີ ຂອງ DVV International 2024 (ອັງກິດ)

**ສິ່ງພິມທັງໝົດແມ່ນສາມາດຮັບໄດ້ຟຣີ ທີ່ຫ້ອງການ ດີວີວີ ອິນເຕີເນເຊິນແນວປະຈຳພາກພື້ນ ຫຼື ດາວໂຫຼດໄດ້ໃນເວັບໄຊ**

**ດີວີວີ ອິນເຕີເນເຊິນແນວ**
ຫ້ອງການປະຈຳພາກພື້ນ ອາຊີຕາເວັນອອກສ່ຽງໃຕ້
ເຮືອນເລກທີ 383/19; ຖະໜົນວັດນາກໃຫຍ່
ບ້ານທ່າພະລານໄຊ, ເມືອງສີສັດຕະນາກ
ຕູ້ ປ.ນ. 1215, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: +856 21 315832-3
ແຟັກ: +856 21 312511
info@dvv-international.la
www.dvv-international.la

*Education for Everyone. Worldwide. Lifelong.*